ຜູ້ແທນປະຊາຊົນ
PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານລະບະເລອາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

25-31 ຕຸລາ 2026 ປີທີ 15 ສະບັບທີ 1087

ກອງປະຊຸມສະໄໝສາມັນເທື່ອທີ 2 ຮັບຮອງເອົາການເລືອກຕັ້ງ ປະທານສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ ຜູ້ໃໝ່



(ສພຊ) - ກອງປະຊຸມສະໄໝສາມັນເທື່ອທີ 2ຂອງສະພາແຫ່ງຊາດຊຸດທີ X ໄດ້ໄຂຂຶ້ນຢ່າງເປັນທາງການ ໃນຕອນເຊົ້າວັນທີ 5 ຕຸລານີ້ ທີ່ຫ້ອງຊຸມໃຫຍ່ສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮັກສາການແທນປະທານສະພາແຫ່ງຊາດ;ເຂົ້າຮ່ວມມີທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກປະ

ອ່ານຕໍ່ໜ້າ 4




ແນວຄິດປະທານ
ໄກສອນ ພົມວິຫານ
ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ເພີ່ມທະວີຄວາມສາມັກຄີປອງຊົນ, ສາມັກຄີບັນດາເຜົ່າ, ກຳແໜ້ນ ແລະ ເສີມຂະຫຍາຍພາລະບົດບາດຂອງອຳນາດການປົກຄອງປະຊາທິປະໄຕປະຊາຊົນ ພາຍໃຕ້ການນຳພາຂອງພັກປະຊາຊົນປະຕິວັດລາວ, ກໍ່ສ້າງ ແລະ ເສີມຂະຫຍາຍສິດເປັນເຈົ້າລວມໝູ່ຂອງປະຊາຊົນ, ຕົ້ນຕໍແມ່ນຂອງປະຊາຊົນຜູ້ອອກແຮງງານ.

(ມີຟິມເລືອກເຟັ້ນ ເຫຼັ້ມ 2, ໜ້າ 42)

ອ່ານຕໍ່ສະບັບໜ້າ

ປະທານສະພາແຫ່ງຊາດ ພົບປະ ນາຍົກລັດຖະມົນຕີຫວຽດນາມ



(ສພຊ) - ຕອນແລງວັນທີ 8 ຕຸລານີ້ ທີ່ສະພາແຫ່ງຊາດ, ສະຫາຍ ສອນໄຊ ສີພັນດອນ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ພົບປະກັບສະຫາຍ ເລ ມິງ ຮຶງ ນາຍົກລັດຖະມົນຕີ ແຫ່ງ ສສ.ຫວຽດນາມໃນໂອກາດຢ້ຽມຢາມ

ອ່ານຕໍ່ໜ້າ 5

ຝົນການກວດກາບາງຂົງເຂດ ຕາມມະຕິ ສພຊ



(ສພຊ) - ທ່ານ ວັນໄຊ ພອງສະຫວັນ ປະທານອົງການກວດກາແຫ່ງລັດ ໄດ້ລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2026 ແລະ ທິດທາງແຜນການເຄື່ອນໄຫວປະຈຳປີ2027 ຂອງອົງການກວດກາແຫ່ງລັດ ຕໍ່ກອງປະຊຸມສະໄໝ

ອ່ານຕໍ່ໜ້າ 4

ຄປຈສພຊ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ



(ສພຊ) - ວັນທີ 5 ຕຸລາ 2026, ທ່ານ ວິໄລ ວົງບຸດດາ ຄຳ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ (ຄປຈສພຊ) ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນ

ອ່ານຕໍ່ໜ້າ 8

ໝົດປີ ຈະເກັບລາຍຮັບເກີນແຜນ, GDP ຈະຂະຫຍາຍຕົວ 5.1%



(ສພຊ) - ສະພາບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໃນໄລຍະ 9 ເດືອນຕົ້ນປີ ແລະ ຄາດຄະເນໝົດປີ 2026 ໂດຍສະເພາະດ້ານເສດຖະກິດມະຫາພາກ ທີ່ທ່ານ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ໄດ້ສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ(ສພຊ) ຊຸດທີ X ໃນວັນທີ 5 ຕຸລານີ້ ເຊິ່ງທ່ານໃຫ້ຮູ້ວ່າ:

1.ດ້ານເສດຖະກິດ: ສືບຕໍ່ຂະຫຍາຍຕົວຢູ່ໃນລະດັບ4.8% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາຂະຫຍາຍຕົວ 4.6% ຍ້ອນຂະແໜງອຸດສາຫະກຳປຸງແຕ່ງ, ການລົງທຶນຂອງພາກເອກະຊົນ ມີການຂະຫຍາຍຕົວ;ຂະແໜງພະລັງ

ອ່ານຕໍ່ໜ້າ 5

ຍົກລະດັບມີຕິກຳຂັ້ນລັດຖະບານ ເປັນມະຕິກອງປະຊຸມສະພາແຫ່ງຊາດ



(ສພຊ) - ວັນທີ 5 ຕຸລາ 2026, ທ່ານ ພົທ. ວັນທອງ ກອງມະນີ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ (ປກສ) ໄດ້ສະເໜີເຫດຜົນ ແລະ ຄວາມຈຳເປັນ ໃນການຂຶ້ນບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ເຊິ່ງເປັນການປະຕິບັດຕາມມະຕິຂອງຄະນະປະຈຳສະພາແຫ່ງຊາດ ສືບຕໍ່ຈັດຕັ້ງປະຕິບັດແຜນງານແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ

ອ່ານຕໍ່ໜ້າ 4

ຊົມເຊີຍຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ຢ່າງສຸດໃຈ!

ຊີວະປະຫວັດຫຍໍ້ທ່ານ ສອນໄຊ ສີພັນດອນ



 # ຊີວະປະຫວັດຫຍໍ້ ຂອງທ່ານ ສອນໄຊ ສີພັນດອນ

- ວັນ, ເດືອນ, ປີ ເກີດ: 26 ມັງກອນ 1966
- ເກີດທີ່: ບ້ານນາ ຫວ້ຽດເມືອງວຽງໄຊແຂວງ ຫົວພັນ
- ຊົນເຜົ່າ: ລາວ
- ທີ່ຢູ່ປັດຈຸບັນ: ບ້ານ ຈອມມະນີ ເມືອງໄຊເສດຖາ ນະຄອນຫຼວງວຽງຈັນ
- ຊັ້ນຕຳແໜ່ງ ແລະ ໜ້າທີ່ຮັບຜິດຊອບ: ກຳມະ ການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ
- ລະດັບການສຶກສາສາມັນ: ມັດທະຍົມຕອນປາຍ, ລະດັບວິຊາສະເພາະ: ປະລິນ ຍາໂທ ສາຂາ: ຄຸ້ມຄອງເສດຖະກິດ, ປະລິນຍາຕີ (ຊັ້ນສູງ) ວິຊາ: ບັນຊາຍຸດທະວິທີ ທະຫານຮາບຍານເກາະ, ປະລິນຍາຕີ ວິຊາ: ພາສາອັງກິດ
- ລະດັບທິດສະດີການເມືອງ: ຂັ້ນສູງ
- ວັນ, ເດືອນ, ປີ ເຂົ້າສັງກັດລັດ: 20 ສິງຫາ 1987
- ວັນ, ເດືອນ, ປີ ເຂົ້າພັກສົມບູນ: 23 ກັນຍາ 1986

ການເຄື່ອນໄຫວໂດຍຫຍໍ້ໃນແຕ່ລະໄລຍະ:

- 1972-1976 ຮຽນປະຖົມຢູ່ໂຮງຮຽນວັດທະນະທຳນ້ອງນ້ອຍ 67, ເມືອງ ໝານໝິ່ງ, ສປຈີນ
- 1976-1982 ຮຽນມັດທະຍົມຕອນຕົ້ນ-ຕອນປາຍ ຢູ່ໂຮງຮຽນວັດທະນະທຳ ກອງທັບ, ເມືອງວຽງໄຊ ແຂວງຫົວພັນ
- 1982-1983 ກຽມພາສາລັດເຊຍ ຢູ່ໂຮງຮຽນສອນພາສາລັດເຊຍ ໂພນເຕັ້ງ
- 1983-1987 ຮຽນປະລິນຍາຕີ ວິຊາ: ບັນຊາຍຸດທະວິທີທະຫານຮາບຍານ ເກາະ, ຢູ່ໂອເດເຊ, ອະດີດສະຫະພາບໂຊວຽດ
- 1987-1989 ຜູ້ຊ່ວຍວຽກພະແນກແຜນການ, ກົມສູ້ຮົບ, ກົມໃຫຍ່ເສນາທິ ການ, ກະຊວງປ້ອງກັນປະເທດ
- 1989-1990 ຮອງຫົວໜ້າພະແນກສູ້ຮົບ, ຫ້ອງເສນາທິການ, ກອງພົນທີ 5, ກະຊວງປ້ອງກັນປະເທດ
- 1990-1994 ຜູ້ຊ່ວຍວຽກກົມສູ້ຮົບ, ກົມໃຫຍ່ເສນາທິການ, ກະຊວງປ້ອງ ກັນປະເທດ
- 1994-2000 ຮຽນປະລິນຍາຕີ ສາຂາຄູພາສາອັງກິດ, ມະຫາວິທະຍາໄລແຫ່ງຊາດ
- 2000-ເດືອນ 4/2000 ຮຽນວິຊາການປົກຄອງ ແລະ ບໍລິຫານລັດຢູ່ສະຖາ ບັນການເມືອງ ແລະ ການປົກຄອງແຫ່ງຊາດ (ສມປຊ)
- ເດືອນ 8/2000-2001 ຮອງຫົວໜ້າຫ້ອງວ່າການແຂວງຈຳປາສັກ
- 2001-2005 ກຳມະການພັກແຂວງ, ຫົວໜ້າຫ້ອງວ່າການແຂວງຈຳປາສັກ
- 2005-2006 ຮອງເລຂາພັກແຂວງ, ຮອງເຈົ້າແຂວງຈຳປາສັກ
- 2006-2010 ກຳມະການສູນກາງພັກ ສະໄໝທີ VIII, ຮອງເລຂາພັກແຂວງ, ເຈົ້າແຂວງຈຳປາສັກ
- 2011-2014 ກຳມະການສູນກາງພັກ ສະໄໝທີ IX, ເລຂາພັກແຂວງ, ເຈົ້າ ແຂວງຈຳປາສັກ
- 2014-2016 ກຳມະການສູນກາງພັກ ສະໄໝທີ IX, ລັດຖະມົນຕີປະຈຳສຳ ນັກງານນາຍົກລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ
- 2016-2019 ກຳມະການກົມການເມືອງສູນກາງພັກ ສະໄໝທີ X, ຮອງນາ ຍົກລັດຖະມົນຕີ
- 2019-2021 ກຳມະການກົມການເມືອງສູນກາງພັກ ສະໄໝທີ X, ຮອງນາ ຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ
- 2021-2022 ກຳມະການກົມການເມືອງສູນກາງພັກ ສະໄໝທີ XI, ຮອງນາ ຍົກລັດຖະມົນຕີ
- ເດືອນ 12/2022-2025 ກຳມະການກົມການເມືອງສູນກາງພັກສະໄໝທີ XI, ນາຍົກລັດຖະມົນຕີ
- 2026 ກຳມະການກົມການເມືອງສູນກາງພັກ ສະໄໝທີ XII, ນາຍົກລັດຖະ ມົນຕີ, ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 15 ແຂວງຈຳປາສັກ
- ເດືອນ 10/2026 - ປັດຈຸບັນ ກຳມະການກົມການເມືອງສູນກາງພັກ ສະໄໝ ທີ XII, ປະທານສະພາແຫ່ງຊາດ ຊຸດທີ X.

ແກ້ໄຂບັນຫາຄູອາສາສະໝັກ ສຳເລັດໂດຍພົ້ນຖານ



(ສພຊ) - ການຈັດ ຕັ້ງປະຕິບັດແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງ ຊາດ ໃນໄລຍະ 9 ເດືອນ ຕົ້ນປີ ແລະ ຄາດຄະເນໝົດ ປີ 2026 ໂດຍສະເພາະຂົງ ເຂດວັດທະນະທຳ-ສັງຄົມ ທີ່ທ່ານນາຍົກລັດຖະມົນຕີ ສະເໜີມໄຊ ກົມມະສິດ ສະ ເໜີຕໍ່ກອງປະຊຸມສະໄໝ ສາມັນເທື່ອທີ 2 ຂອງສະ ພາແຫ່ງຊາດ (ສພຊ) ຊຸດ ທີ X ເມື່ອວັນທີ 5 ຕຸລາ ຜ່ານມາເຊິ່ງທ່ານໃຫ້ຮູ້ວ່າ:

ຂະແໜງສຶກສາທິ ການ ແລະ ກິລາ: ໄດ້ສົ່ງ ເສີມສາຍສາມັນວິຊາຊີບ ແລະ ປັບປຸງໂຄງສ້າງຫຼັກ ສູດ ທັງ 12 ຊັ້ນຮຽນ, ພັດ ທະນາປຶ້ມແບບຮຽນ ແລະ ຄູ່ມືຄູຕາມທິດທັນສະໄໝ; ປັບປຸງບັນດາວິທະຍາໄລ ສ້າງຄູໃນທ້ອງຖິ່ນ ໂດຍ ຍຸບໂຮມເຂົ້າກັນ ແລະ ສ້າງ ເປັນມະຫາວິທະຍາໄລສ້າງ ຄູແຫ່ງຊາດ, ກະກຽມສ້າງ ຕັ້ງມະຫາວິທະຍາໄລມິດ ຕະພາບ ລາວ-ຫວຽດນາມ ແລະ ໂຮງຮຽນມິດຕະພາບ ລາວ-ລັດເຊຍ; ແກ້ໄຂບັນ ຫາຄູອາສາສະໝັກສຳເລັດ ໂດຍພົ້ນຖານ ໂດຍບັນຈຸ ໂກຕາລັດຖະກອບຄູເຂົ້າ ໃນກຳປ້ອງກັນຊາດ ແລະ ໂກຕາຄູທົດແທນຕາມຈຳ ນວນທີ່ສູນເສຍ.

ຂະແໜງສາທາລະ ນະສຸກ: ໄດ້ສຸມໃສ່ປະຕິບັດ ວຽກງານການໃຫ້ວັກຊີນ ກັນພະຍາດໃນຂອບເຂດ ທົ່ວປະເທດ, ປັບປຸງ ແລະ ປະຕິບັດວຽກງານສົ່ງເສີມ ສຸຂະພາບແມ່ ແລະ ເດັກ, ປະເມີນວຽກງານຄຸນນະ ພາບການບໍລິການປິ່ນປົວ 5 ດີ 1 ພໍໃຈ ຢູ່ໂຮງໝໍ ແຂວງຫຼວງພະບາງ ແລະ ອຸດົມໄຊ, ແລະ ເອົາໃຈໃສ່ ເຝົ້າລະວັງການລະບາດຂອງ ພະຍາດຕາມລະດູການຕ່າງໆ.

ຂະແໜງແຮງງານ ແລະ ສະຫວັດດີການສັງ ຄົມ: ຈັດຫາວຽກເຮັດງານ ທຳເຂົ້າສູ່ຕະຫຼາດແຮງງານ ພາຍໃນ ແລະ ຕ່າງປະເທດ ໄດ້ 119,382 ຄົນ ລື່ນ ແຜນການ 45.23% (ມະ ຕິ ສພຊ: 82,200 ຄົນ), ຂະຫຍາຍອັດຕາການປົກ ຄຸມປະກັນສັງຄົມ ໂດຍ ການຂຶ້ນທະບຽນໃໝ່ແລະ ຈ່າຍເງິນສົມທົບ ໄດ້ 41,814 ຄົນ ເທົ່າກັບ 50% ຂອງແຜນການ (ມະຕິ ສພຊ: 84,126 ຄົນ); ໄດ້ຄົ້ນຄວ້າ ແລະ ຂໍອະນຸມັດງົບປະມານຈັດ ຕັ້ງປະຕິບັດນະໂຍບາຍຕໍ່ຜູ້ ມີຜົນງານ ແລະ ຄຸນງາມ ຄວາມດີໃນຜ່າລະກິດຮັບ ໃຊ້ການປະຕິວັດຊາດປະ ຊາທິປະໄຕ ຕາມດຳລັດ 57/ລບ ຈຳນວນ 7,290 ທ່ານ ລື່ນແຜນການ 376% (ມະຕິ ສພຊ: 1,530 ທ່ານ) ເປັນເງິນ ປະມານ 125.67 ຕື້ກີບ (ມະຕິ ສພຊ: 25 ຕື້ກີບ) ແລະ ໃຫ້ພະນັກງານເສຍ ອົງຄະ ຈຳນວນ 41 ທ່ານ ເປັນເງິນ 200.02 ລ້ານ ກີບ.

ຂະແໜງວັດທະນະ ທຳ ແລະ ການທ່ອງທ່ຽວ: ນັກທ່ອງທ່ຽວສາກົນເຂົ້າ ມາ ສປປລາວ ໄດ້ 3,279,241 ເທື່ອຄົນ ເທົ່າກັບ 73% ຂອງແຜນ ການປີ (ມະຕິ ສພຊ: 4,462,252 ເທື່ອຄົນ) ຄາດຄະເນໝົດ ປີ 3,664,568 ເທື່ອຄົນ ເທົ່າກັບ 81.8% ຂອງ ແຜນການ (ຫຼຸດລົງປະມານ 20% ທຽບໃສ່ປີ 2025) ສ້າງລາຍຮັບໝຸນວຽນຈາກ ການທ່ອງທ່ຽວ ໄດ້ 960 ກວ່າລ້ານໂດລາ, ສຳເລັດ ການກໍ່ສ້າງ ແລະ ປັບປຸງ ເສັ້ນທາງໃນເຂດສະບານ ເມືອງວັງວຽງ, ສຳເລັດການ ຮັບຮອງແຜນພັດທະນາ ການທ່ອງທ່ຽວຂອງ ສປປ ລາວ ສຳລັບປີ 2026-2030, ສຳເລັດການຮ່ວມ ມືແກ້ໄຂບັນຫາທົ່ວ 0 ໂດ ລາ ໂດຍໄດ້ລົງກວດກາ ຮ້ານຂາຍເຄື່ອງທີ່ລະນຶກ ທີ່ໄດ້ຮັບການລາຍງານກ່ຽວ ກັບການບັງຄັບຊື້ສິນຄ້າ ແພງແລະບໍ່ມີຄຸນນະພາບ, ແລະ ຝຶກອົບຮົມນຳໃຊ້ລະ ບົບອະນຸຍາດນຳເຂົ້ານັກ ທ່ອງທ່ຽວແບບອອນລາຍ ເພື່ອຫັນເປັນທັນສະໄໝ.



ມາດຕະການເພື່ອຮັບປະກັນການສະໜອງນ້ຳມັນ

(ສພຊ) - ທ່ານ ສະເໜີມໄຊ ກົມມະສິດ ນາຍົກລັດຖະມົນຕີ ໄດ້ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ X ຄັ້ງ ວັນທີ 7 ຕຸລາ 2026 ເຊິ່ງ ມີດັ່ງນີ້:

#ຄຳຖາມທີ 1: ລັດຖະບານມີແຜນກະຈາຍຄວາມສ່ຽງ ແລະ ຮັບປະກັນການສະໜອງນ້ຳມັນ ໃຫ້ສັງຄົມຄືແນວໃດ?

1. ມາດຕະການໄລຍະສັ້ນ:

- ເພີ່ມທະວີການກວດກາບໍລິສັດນຳເຂົ້າ-ສົ່ງອອກ ແລະ ບໍລິສັດຈຳໜ່າຍນ້ຳມັນເຊື້ອໄຟ ເພື່ອສະກັດກັ້ນການກັກຕຸນ ແລະ ການສວຍໂອກາດຂຶ້ນລາຄາ ໂດຍຮັບປະກັນການຊື້-ຂາຍ ໃຫ້ເປັນໄປຕາມໂຄງສ້າງລາຄາຢ່າງໂປ່ງໃສ;

- ຄວບຄຸມໃຫ້ບໍລິສັດ ຮັກສາລະດັບຄັງແຮ ທຸລະກອງຕາມມາດຕະຖານທີ່ກຳນົດໄວ້ໃນດຳລັດ 559/ລບ ແລະ ລາຍງານຢ່າງປົກກະຕິກ່ຽວກັບປະລິມານ ການນຳເຂົ້າ ແລະ ຍອດເຫຼືອປະຈຳວັນ ຜ່ານລະບົບ DTOP ເພື່ອປະເມີນສະພາບການລ່ວງໜ້າ ພ້ອມທັງຮັກສາລະດັບແຮທຸລະກອງນ້ຳມັນເຊື້ອໄຟພາຍໃນປະເທດ ໃຫ້ຢູ່ໃນລະດັບສູງ (ປະມານ 60 ລ້ານລິດຂຶ້ນໄປ);

- ອຳນວຍຄວາມສະດວກໃນການນຳເຂົ້າຈາກຫຼາຍແຫຼ່ງ ແລະ ຊຸກຍູ້ໃຫ້ບໍລິສັດ ຂະຫຍາຍຖານການຊື້ນ້ຳມັນຈາກຫຼາຍປະເທດ (ເຊັ່ນ: ຫວຽດນາມ, ຈີນ ແລະ ສິງກະໂປ...) ແທນການເພິ່ງພາແຫຼ່ງດຽວ ເພື່ອປ້ອງກັນຄວາມສ່ຽງ;

-ເນັ້ນການສະໜອງນ້ຳມັນເຊື້ອໄຟໃຫ້ປ້ຳນ້ຳມັນສາມາດເປີດບໍລິການ ເພື່ອຮັບໃຊ້ສັງຄົມ ແລະ ພາກການຜະລິດຢ່າງຕໍ່ເນື່ອງ;

-ສືບຕໍ່ປະຕິບັດມາດຕະການຜ່ອນຜັນອັດຕາອາກອນຊົມໃຊ້ໃນລາຄານ້ຳມັນເຊື້ອໄຟ ຕາມທີ່ ສພຊ ຮັບຮອງ.

2. ມາດຕະການໄລຍະຍາວ (ຍຸດທະສາດແຫ່ງຊາດ):

-ຊຸກຍູ້ໂຄງການສ້າງສາງນ້ຳມັນເຊື້ອໄຟ 3 ພາກ (ເໜືອ-ກາງ-ໃຕ້) ພ້ອມທັງສຶກສາການເຊື່ອມໂຍງລະບົບແຮທຸລະກອງນ້ຳມັນຮ່ວມກັນຂອງອາຊຽນ (ASEAN Joint Stockpiling Initiatives) ເພື່ອຊ່ວຍເຫຼືອກັນໃນພາວະວິກິດ;

- ເລັ່ງສຶກສາຄວາມເປັນໄປໄດ້ໃນການລົງທຶນກໍ່ສ້າງທໍ່ສົ່ງນ້ຳມັນ ລາວ-ຫວຽດນາມ ເພື່ອຫຼຸດຕົ້ນທຶນ, ຫຼຸດຜ່ອນການເພິ່ງພາການຂົນສົ່ງທາງລົດ ແລະ ຮັບປະກັນການສະໜອງປະລິມານຫຼາຍຢ່າງຕໍ່ເນື່ອງ;

-ຍົກລະດັບມາດຕະຖານ ແລະ ສົ່ງເສີມການລົງທຶນໃນໂຮງງານປຸງແຕ່ງນ້ຳມັນພາຍໃນປະເທດ ເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນສຳເລັດຮູບທັງໝົດ;

-ເສີມຂະຫຍາຍບົດບາດຂອງລັດວິສາຫະກິດນ້ຳມັນເຊື້ອໄຟລາວ ເປັນກົນໄກຫຼັກໃນການດຸ່ນດ່ຽງຕະຫຼາດ ເພື່ອໃຫ້ລັດມີເຄື່ອງມືແຊກແຊງລາຄາ ແລະ ສະໜອງນ້ຳມັນໃນກໍລະນີພາກເອກະຊົນພົບບັນຫາ.

#ຄຳຖາມທີ 2: ລັດຖະບານມີນະໂຍບາຍ ແລະ ມາດຕະການຮີບດ່ວນໃນການສະໜອງພະລັງງານໝຸນວຽນ ແລະ ຖ່ານຫີນ ຄືແນວໃດ ເພື່ອຮັບປະກັນການສະໜອງໄຟຟ້າໃຫ້ພຽງພໍໃນອະນາຄົດ ທີ່ເຮົາກຳລັງຈະມີນະໂຍບາຍຊຸກຍູ້ໃຫ້ປຸງແຕ່ງແຮ່ພາຍໃນປະເທດ?



ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາພະລັງງານໄຟຟ້າປີ2021-2030ເຫັນວ່າຄວາມຕ້ອງການ ແລະ ການຊົມໃຊ້ພະລັງງານໄຟຟ້າພາຍໃນປະເທດ ມີທ່າອຽງເພີ່ມຂຶ້ນຢ່າງກ້າວກະໂດດ ໂດຍສະເພາະຈາກພາກອຸດສາຫະກຳຂະໜາດໃຫຍ່ ແລະ ນະໂຍບາຍການສົ່ງເສີມການນຳໃຊ້ຍານພາຫະນະໄຟຟ້າ (EV), ນຳໃຊ້ລົດສາທາລະນະຢ່າງກວ້າງຂວາງ ເພື່ອຫຼຸດຜ່ອນການນຳເຂົ້ານ້ຳມັນຕື່ມ; ຄຽງຄູ່ກັນນັ້ນ, ການພັດທະນາແຫຼ່ງພະລັງງານທາງເລືອກໃໝ່ ກໍມີຄວາມຫຼາກຫຼາຍ ແລະ ຜົນສຳເລັດເປັນກ້າວໆມາໂດຍສະເພາະແມ່ນໂຄງການພະລັງງານລົມ ທີ່ປັດຈຸບັນສາມາດຜັດທະນາສຳເລັດ ແລະ ສົ່ງອອກໄຟຟ້າໄປຕ່າງປະເທດເຖິງ 1,500 ເມກາວັດ (ສົ່ງອອກຕ່າງປະເທດ 100%).

ພ້ອມນີ້, ໃນແຜນຍຸດທະສາດດັ່ງກ່າວ ຍັງມີແຜນໂຄງການໄຟຟ້າຄວາມຮ້ອນຈາກຖ່ານຫີນເພື່ອສະໜອງພາຍໃນໂຄງການ ທີ່ມີກຳລັງຕິດຕັ້ງລວມກັນສູງເຖິງ 750 MW ເຂົ້າໃນແຜນພັດທະນາໄຟຟ້າແຫ່ງຊາດ ປີ 2021-2030 ແຕ່ອາດຈະບໍ່ສາມາດພັດທະນາສຳເລັດຕາມແຜນ ເນື່ອງຈາກບໍ່ສາມາດຫາແຫຼ່ງທຶນມາພັດທະນາໄດ້ ເທື່ອ;ຕໍ່ກັບບັນຫາດັ່ງກ່າວ, ຈຶ່ງສະເໜີໃຫ້ຮັກສາແຫຼ່ງຖ່ານຫີນ ເພື່ອເປັນເຊື້ອເພີງໃນການຜະລິດໄຟຟ້າໃນອະນາຄົດ.

#ຄຳຖາມທີ 3: ໃນກິດຈະການທີ່ນຳໃຊ້ຊັບພະຍາກອນທຳມະຊາດ, ລັດຖະບານມີແຜນຈະຮັດແນວໃດ ໃຫ້ລັດ ແລະ ປະຊາຊົນໄດ້ຮັບຜົນປະໂຫຍດສູງກວ່າເກົ່າ ແລະ ມີນະໂຍບາຍຈະສະໜອງຊັບພະຍາກອນຊະນິດໃດໃຫ້ກັບລັດຖະບານ ແລະ ຄົນລາວ ຫຼື ບໍ່ໃຫ້ຕ່າງປະເທດຖືຮຸ້ນ 100%?

ສຳລັບຊັບພະຍາກອນແຮ່ທາດທີ່ເປັນທ່າແຮງສຳຄັນຂອງການພັດທະນາປະເທດເຮົາ, ປັດຈຸບັນ ລັດຖະບານກຳລັງຄົ້ນຄວ້າອອກຄຳສັ່ງກ່ຽວກັບນະໂຍບາຍການພັດທະນາແຮ່ທາດໃນໄລຍະໃໝ່ (ຄາດວ່າຈະປະກາດໃຊ້ໃນໄວໆນີ້) ໂດຍຮ່າງຄຳສັ່ງດັ່ງກ່າວ ໄດ້ກຳນົດກ່ຽວກັບທິດທາງການພັດທະນາແຮ່ທາດແຕ່ລະຊະນິດ ເຊັ່ນ: ແຮ່ທາດຫາຍາກ, ແຮ່ຄຳ, ແຮ່ເກືອໂປຕາສ, ຫີນກາວ, ຖ່ານຫີນ, ບົກຊິດ ແລະ ອື່ນໆ ໂດຍຈະຫຼຸດຜ່ອນ, ຈຳກັດ ແລະ ກ້າວໄປສູ່ການຢຸດຕິສົ່ງອອກແຮ່ດິບໂດຍປາດສະຈາກການປຸງແຕ່ງຢ່າງຂາດຕົວ; ແຕ່ຈະສົ່ງເສີມການປຸງແຕ່ງແຮ່ທາດຢູ່ພາຍໃນ ໃຫ້ເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ໃນນີ້, ຈະຊຸກຍູ້ສົ່ງເສີມຜູ້ພັດທະນາ ແລະ ຜູ້ລົງທຶນ ພັດທະນາໂຮງງານປຸງແຕ່ງແຮ່ທາດຢູ່ ສປປລາວ ຫຼື ຜູ້ທີ່ບໍ່ມີໂຮງງານປຸງແຕ່ງ ກໍນຳໃຊ້ໂຮງງານປຸງແຕ່ງໃນ ສປປລາວ ແລ້ວຈຶ່ງສົ່ງອອກ.ປັດຈຸບັນ, ກຳລັງປັບປຸງກົດໝາຍວ່າດ້ວຍແຮ່ທາດ ເຊິ່ງຈະສະເໜີຜ່ານກອງປະຊຸມ ສພຊ ໃນໄວໆນີ້.

ຄຳຖາມທີ 4: ຜ່ານມາລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ໄດ້ອະນຸມັດໂຄງການໃຫ້ເຊົ່າ-ສຳປະທານທີ່ດິນຂອງລັດ (ລວມທັງເວນຄືນທີ່ດິນປະຊາຊົນໃຫ້ແກ່ການລົງທຶນ) ຈຳນວນຫຼາຍກວ່າ 2,500 ໂຄງການ, ເຮົາໄດ້ມີການປະເມີນຜົນປະໂຫຍດ ແລະ ຜົນກະທົບລວມຕໍ່ລັດ ແລະ ປະຊາຊົນຄືແນວໃດ?

ລັດຖະບານໄດ້ລົງກວດກາຄືນໂຄງການເຊົ່າ ແລະ ສຳປະທານທີ່ດິນໃນຂອບເຂດທົ່ວປະເທດທີ່ຢູ່ໃນເປົ້າໝາຍທີ່ສະພາແຫ່ງຊາດຮັບຮອງ ແນໃສ່ກວດກາການນຳໃຊ້ຊັບພະຍາກອນດິນໃຫ້ໄປຕາມແຜນຈັດສັນທີ່ດິນແຫ່ງຊາດ ແລະ ຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນຂອງບັນດາຂະແໜງການ ແລະ ທ້ອງຖິ່ນ ຕິດພັນກັບການຄຸ້ມຄອງສິ່ງແວດລ້ອມຂອງໂຄງການປະເພດຕ່າງໆຄືນໃໝ່ ໂດຍຈະທົບທວນໂຄງການເຊົ່າ-ສຳປະທານເປັນລາຍໂຄງການ ໂດຍແບ່ງເປັນ: ໂຄງການທີ່ດຳເນີນດີ ຈະໃຫ້ສືບຕໍ່, ໂຄງການທີ່ມີບັນຫາ ຈະຕ້ອງໄດ້ຮັບການແກ້ໄຂ, ແລະ ໂຄງການທີ່ບໍ່ປະຕິບັດຕາມສັນຍາ, ບໍ່ມີຄວາມຄືບໜ້າ ຫຼື ບໍ່ກຸ້ມຄ່າກໍຈະມີມາດຕະການຕັກເຕືອນ ຫຼື ປັບປຸງສັນຍາ ຈົນກ້າວໄປເຖິງການພິຈາລະນາຍົກເລີກ ຫຼື ຖອນຄືນຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການ; ພ້ອມກັນນີ້, ກໍຈະລາຍງານຜົນການກວດກາໃຫ້ ສພຊ ຮັບຊາບນຳ.

ຈາກບົດຮຽນ ແລະ ຄວາມທ້າທາຍໃນການຈັດຕັ້ງປະຕິບັດໃນໄລຍະຜ່ານມາ, ໃນຕໍ່ໜ້າ ລັດຖະບານ ຈະສືບຕໍ່ກວດກາ ແລະ ເພີ່ມທະວີເອົາໃຈໃສ່ໃນການອະນຸມັດໂຄງການ ກໍຄືການອະນຸມັດເຊົ່າ-ສຳປະທານທີ່ດິນລັດ ໂດຍຈະກຳນົດມູນຄ່າທີ່ດິນ, ການຊົດເຊີຍ, ການກຳນົດພັນທະຂອງຜູ້ລົງທຶນ ພ້ອມທັງຄຸ້ມຄອງ, ຕິດຕາມກວດກາຫຼັງການອະນຸມັດຢ່າງເຂັ້ມງວດ ແຕ່ຫົວທີ ແລະ ເປັນແຕ່ລະໄລຍະ; ການອະນຸມັດ ຈະຄຳນຶງ ແລະ ຊັ່ງຊາລະຫວ່າງຜົນໄດ້ຮັບທາງເສດຖະກິດ ກັບ ຜົນກະທົບຕໍ່ສັງຄົມ-ສິ່ງແວດລ້ອມ ໃຫ້ມີຄວາມສົມດຸນ ແລະ ຮັດກຸມ.

ມອບ-ຮັບນ້ຳດື່ມ ປະກອບສ່ວນເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 2



(ສພຊ) - ວັນທີ 6 ຕຸລານີ້ ໄດ້ມີພິທີມອບ-ຮັບນ້ຳດື່ມ ມິນິໂຣ ພຣີມຽມ ຈຳນວນ 1,052 ແພັກ ລວມມູນຄ່າ 200 ລ້ານກີບ ເພື່ອປະກອບສ່ວນເຂົ້າໃນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ທີ່ຈະດຳ ເນີນໄປຈົນເຖິງວັນທີ 21 ຕຸລາ 2026, ຕາງໜ້າຮັບໂດຍທ່ານ ບຸນຈັນ ສີວິງພັນ ຫົວໜ້າຫ້ອງວ່າການສະພາແຫ່ງຊາດ ແລະ ມອບໂດຍທ່ານ ໄຊຍະສິດ ຊະນະແກ້ວ ຜູ້ອຳນວຍການໂຮງງານນ້ຳດື່ມ ມິນິໂຣ ແລະ ນ້ຳໝາກໄມ້ ຈຳກັດ (ກຸ່ມບໍລິສັດ DSK ຈຳກັດ); ໂອກາດນີ້, ທ່ານ ບຸນຈັນ ສີວິງພັນ ໄດ້ມອບໃບຍ້ອງຍໍຂອງປະທານຄະນະປະຈຳສະພາແຫ່ງຊາດ ໃຫ້ກຸ່ມບໍລິສັດດັ່ງກ່າວ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນຄັ້ງນີ້ ເພື່ອເປັນການສົມນະເສີມຜົນງານ ແລະ ຄຸນງາມ ຄວາມດີ ຢ່າງສົມກຽດ.

ຜົນການກວດກາ...

(ຕໍ່ຈາກໜ້າ 1)

ສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ເມື່ອວັນທີ 8 ຕຸລານີ້ ໂດຍສະເພາະວຽກກວດກາການບໍລິຫານລັດ ເຊິ່ງໃນໄລຍະ 9 ເດືອນ ປີ 2026 ໄດ້ສຸມໃສ່ດຳເນີນການກວດກາຕາມມະຕິສະພາແຫ່ງຊາດ ສະບັບເລກທີ 172/ສພຊ ເຊິ່ງມີບາງຂົງເຂດດັ່ງນີ້:

1. ກວດກາໂຄງການລົງທຶນຂອງລັດ (ມູນຄ່າ 10 ຕື້ກີບລົງມາ ແລະ 10 ຕື້ກີບຂຶ້ນໄປ) 58 ໂຄງການຢູ່ນະຄອນຫຼວງວຽງຈັນ (ນວ) ພົບເຫັນໂຄງການສ່ວນຫຼາຍທີ່ຈັດຕັ້ງປະຕິບັດແຕ່ປີ 2015 ຄືນຫຼັງ ບໍ່ມີບົດສະເໜີໂຄງການ, ບໍ່ຜ່ານການປະເມີນ,ບໍ່ຜ່ານການປະມູນຈັດຊື້-ຈັດຈ້າງ, ບໍ່ວາງເງິນຄ້ຳປະກັນສັນຍາ 10%, ສັນຍາບໍ່ໄດ້ຈົດທະບຽນສານ ແລະ ບໍ່ມີໃບມອບ-ຮັບໂຄງການຖາວອນ. ນອກນັ້ນ, ມີ 5 ໂຄງການເຈົ້າຂອງໂຄງການ,ບໍລິສັດຮັບເໝົາກໍ່ສ້າງ ຍັງບໍ່ທັນຮັບຮອງຜົນຂອງການກວດກາ; 30 ໂຄງການ ການຊຳລະເງິນຕົວຈິງລະຫວ່າງພະແນກການເງິນ ກັບ ບໍລິສັດ ບໍ່ກົງກັນ ຜິດດ່ຽງ 706.47 ຕື້ກີບ ແລະ 21 ໂຄງການ ມູນຄ່າເຫຼືອຈາກສັນຍາບໍ່ສືບຕໍ່ຈັດຕັ້ງປະຕິບັດ ແລະ ອື່ນໆ 276.63 ຕື້ກີບຕ້ອງໄດ້ຫັກລົບອອກຈາກມູນຄ່າລວມຂອງໂຄງການແລະສາລະບານແຜນການລົງທຶນຂອງລັດ.

2. ກວດກາ 4 ເຂດເສດຖະກິດພິເສດ ຢູ່ ນວ ເຫັນວ່າ: ການແກ້ໄຂສິ່ງກີດຂວາງ, ການຊົດເຊີຍໃຫ້ຜູ້ຖືກຜົນກະທົບ, ການອອກໃບຕາດິນໃຫ້ຜູ້ພັດທະນາ ບາງເຂດຍັງບໍ່ທັນສຳເລັດ. ປັດຈຸບັນ, ບາງເຂດຍັງບໍ່ມີການພັດທະນາ; ຜູ້ລົງທຶນຈຳນວນຫຼາຍ ນຳເຂົ້າທຶນໂດຍບໍ່ຜ່ານທະນາຄານແຫ່ງ ສປປລາວ; ການກໍ່ສ້າງຕຶກ, ອາຄານ, ສຳນັກງານ ໃນເຂດເສດຖະກິດພິເສດ ບໍ່ປະຕິບັດພັນທະອາກອນມູນຄ່າເພີ່ມ, ບໍ່ປະຕິບັດພັນທະຄ່າຊົດເຊີຍ ແລະ ການນຳໃຊ້ທີ່ດິນ ເວັ້ນພາສີ-ອາກອນ ແລະ ການເສຍພາສີ-ອາກອນ 1% ເລີ່ມແຕ່ປີ 2019 ຈຳນວນ 9 ແຂວງ, ຜ່ານການກວດກາພົບເຫັນ: ການອະນຸມັດນຳເຂົ້າພາຫະນະ ຍັງບໍ່ເປັນລະບົບ, ອະນຸມັດຫຼາຍຄັ້ງຕໍ່ປີ; ໃບອະນຸຍາດດຳເນີນທຸລະກິດໝົດອາຍຸ ຍັງປະກອບເຂົ້າໃນແຜນນຳເຂົ້າພາຫະນະ, ທະບຽນວິສາຫະກິດ ບໍ່ຖືກກັບທຸລະກິດທີ່ປະຕິບັດຕົວຈິງ ແລະ ນຳໃຊ້ເລກປະຈຳຕົວຜູ້ເສຍອາກອນຂອງບໍລິສັດອື່ນ ນຳເຂົ້າພາຫະນະກົນຈັກ; ມີພາຫະນະນຳເຂົ້າແບບຊົ່ວຄາວ ແລະ ນຳເຂົ້າເສຍພາສີ-ອາກອນ 1% 141 ຄັນ ຢູ່ 6 ແຂວງ ທີ່ສັນຍາໝົດກຳນົດ, ບໍ່ຕໍ່ສັນຍາ, ບໍ່ສົ່ງລົດອອກຄືນ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ; ກວດພົບພາຫະນະທີ່ບໍ່ມີເອກະສານຢັ້ງຢືນການນຳເຂົ້າ ແລະ ການເສຍພາສີ-ອາກອນ ຕາມກົດໝາຍ ຢູ່ 2 ແຂວງ 310 ຄັນ (ຫົວລາກ 158 ຫົວ, ຫາງລາກ 130 ຫາງ, ລົດສິບລໍ້ 18 ຄັນ ແລະ ລົດຈັກ 4 ຄັນ); ລົດ 8 ຄັນ ຢູ່ 1 ແຂວງ ມີເອກະສານການນຳເຂົ້າມາຮັບໃຊ້ໂຄງການ ແຕ່ບໍ່ເຫັນລົດຕົວຈິງຢູ່ພາກສະໜາມ.

4. ກວດກາກອງຄຸ້ມຄອງສະໜາມບິນ ແລະ ກອງຈາລະຈອນທາງອາກາດ ໂດຍລົງເລີກກວດກາບັນດາສັນຍາຈັດຊື້-ຈັດຈ້າງ ໄລຍະປີ 2019-2026 ມີ 331 ສັນຍາ ໃນນີ້, ກວດກາສຳເລັດ 148 ສັນຍາ, ຜ່ານການກວດກາພົບເຫັນດັ່ງນີ້: ກອງຄຸ້ມຄອງສະໜາມບິນ ມີ 213 ສັນຍາ, ກວດກາສຳເລັດ 66 ສັນຍາ ໃນນີ້ມີ 19 ສັນຍາ ມູນຄ່າ 139 ຕື້ກີບ ມີບາງວຽກທີ່ບໍ່ໄດ້ຈັດຕັ້ງປະຕິບັດແລະ ມູນຄ່າສູງເກີນລາຄາທ້ອງຕະຫຼາດ 13.38 ຕື້ກີບ, ມີ 6 ສັນຍາ ມູນຄ່າ 55.32 ຕື້ກີບ ໄດ້ເຊັນສັນຍາ ແລະ ຊຳລະເງິນໃນວັນດຽວກັນ; ກອງຈາລະຈອນທາງອາກາດ ມີ 118 ສັນຍາ, ກວດກາສຳເລັດ 82 ສັນຍາ ເຫັນວ່າມີ 3 ສັນຍາ ມູນຄ່າ 2.62 ຕື້ກີບ ມີໜ້າວຽກທີ່ບໍ່ໄດ້ຈັດຕັ້ງປະຕິບັດ ມູນຄ່າ 100 ລ້ານກີບ.

5. ກວດກາການຄຸ້ມຄອງ ແລະ ນຳໃຊ້ເງິນກູ້ຢືມຂອງລັດຖະບານ(ລົງເລິກບາງໂຄງການທີ່ໄດ້ເຊັນສັນຍາໃນຮູບແບບ EPC) ຕາມບັນຊີຂໍ້ມູນຂອງກະຊວງກ່ຽວຂ້ອງເຫັນວ່າລັດຖະບານໄດ້ກູ້ຢືມເງິນມາຈັດຕັ້ງປະຕິບັດໂຄງການ 89 ສັນຍາ ມູນຄ່າ 5.93 ຕື້ໂດລາ ກັບ 6.43 ຕື້ຢວນ ໃນນີ້, ກູ້ຢືມຈາກທະນາຄານ EXIM ສປຈີນ 77 ສັນຍາ ມູນຄ່າ 4.77 ຕື້ໂດລາ ກັບ 6.43 ຕື້ຢວນ ແລະ ກູ້ຢືມຈາກບັນດາບໍລິສັດຂອງ ສປຈີນ 12 ສັນຍາ ມູນຄ່າ 1.16 ຕື້ໂດລາ ເຊິ່ງໄດ້ກວດກາ 11 ສັນຍາ ມູນຄ່າ 761.24 ລ້ານໂດລາ ແລະ 1.10 ຕື້ຢວນ, ຜ່ານການກວດກາເຫັນວ່າ: ການປະຕິບັດໂຄງການໃນຮູບແບບ EPC ເປັນສັນຍາເໝົາຈ່າຍ (Lump Sum) ໂດຍບໍລິສັດຜູ້ຮັບເໝົາ ເປັນຜູ້ຮັບຜິດຊອບ-ອອກແບບ-ກໍ່ສ້າງ, ສະໜອງວັດຖຸກໍ່ສ້າງທັງໝົດ, ການຄິດໄລ່ເງິນບໍລິຫານ ແລະເງິນຄຸ້ມຄອງໂຄງການສູງເກີນລະບຽບການກຳນົດ, ມູນຄ່າການກໍ່ສ້າງສູງ ແລະ ເນື້ອໃນສັນຍາບາງສ່ວນບໍ່ຮັດກຸມ, ບໍ່ໄດ້ກຳນົດມາດຕະການຕໍ່ບໍລິສັດຜູ້ຮັບເໝົາ ໃນກໍລະນີການລະເມີດສັນຍາ; ການຄຸ້ມຄອງ, ນຳໃຊ້ເງິນກູ້ຢືມ ແມ່ນບໍລິສັດເປັນຜູ້ຄຸ້ມຄອງ ແລະ ນຳໃຊ້ເງິນກູ້ເອງ, ແຕ່ລັດຖະບານເປັນຜູ້ຊຳລະຕົ້ນທຶນ ແລະ ດອກເບ້ຍຄືນໃຫ້ບໍລິສັດຕາມສັນຍາ; ພາຍຫຼັງສຳເລັດໂຄງການ ບໍ່ມອບຮັບຊັບສິນຂອງລັດທີ່ໄດ້ຈາກໂຄງການກູ້ຢືມຄືນໃຫ້ລັດຖະບານເປັນຜູ້ຄຸ້ມຄອງ ແລະ ບໍລິສັດຍັງໄດ້ຮັບການຍົກເວັ້ນພາສີ-ອາກອນ ແລະ ຄ່າຊົບພະຍາກອນທຳມະຊາດ. ນອກນັ້ນ,ຍັງພົບເຫັນເງິນທີ່ເຫຼືອຈາກການຈັດຕັ້ງປະຕິບັດໂຄງການ 4.70 ລ້ານໂດລາ ທີ່ຈະຕ້ອງໄດ້ຫັກລົບອອກຈາກວົງເງິນກູ້ຢືມ.

6. ກວດກາການຈ່າຍຄ່າຊົດເຊີຍໃຫ້ປະຊາຊົນທີ່ໄດ້ຮັບຜົນກະທົບ 968 ຄົວເຮືອນ ຈາກສັນເຂື່ອນDຂອງເຂື່ອນໄຟຟ້າເຊປຽນ-ເຊນ້ຳນ້ອຍ ແຕກພັງ ຢູ່ເມືອງສະໜາມໄຊ ແຂວງອັດຕະປື ລາຍການທີ 6 (ວັດຖຸມີຄ່າ ແລະ ເຄື່ອງໃຊ້ໃນຄົວເຮືອນ...) ທີ່ຍັງບໍ່ທັນໄດ້ຮັບເງິນຊົດເຊີຍ; ປັດຈຸບັນ, ບໍລິສັດ PNPC ໄດ້ຈ່າຍໃຫ້ອົງການປົກຄອງແຂວງ 10 ລ້ານໂດລາ ເພື່ອໃຫ້ແຂວງນຳໄປຊົດເຊີຍ ເຊິ່ງໄດ້ຊົດເຊີຍ 956 ຄົວເຮືອນ ເທົ່າກັບ 98.76% ຍັງ 12 ຄົວເຮືອນ ທີ່ບໍ່ທັນຍອມຮັບເອົາຄ່າຊົດເຊີຍ.

ຍົກລະດັບ...

(ຕໍ່ຈາກໜ້າ 1)

ເພື່ອຄວບຄຸມ, ປ້ອງກັນ, ສະກັດກັ້ນ ແລະ ຕ້ານຢາເສບຕິດໃນສັງຄົມ ໃຫ້ຫຼຸດໜ້ອຍຖອຍລົງເທື່ອລະກ້າວ ແນໃສ່ປົກປັກຮັກສາຄວາມສະຫງົບທາງດ້ານການເມືອງ,ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຂອງຊາດ.

ໄລຍະຜ່ານມາ, ກະຊວງ ປກສ ໄດ້ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໂດຍມີການເຂົ້າຮ່ວມຂອງທຸກຂະແໜງການຂອງອົງການຈັດຕັ້ງ ຜັກ-ລັດ ແລະ ສັງຄົມ ຢ່າງຕັ້ງໜ້າ ແລະ ສາມາດແກ້ໄຂຄະດີຢາເສບຕິດໄດ້ຢ່າງຫຼວງຫຼາຍ ແລະ ຢຶດວັດຖຸເຄື່ອງຂອງກ່ຽວຂ້ອງຄະດີເປັນຢາເສບຕິດປະເພດຕ່າງໆ, ວັດຖຸອຸປະກອນ ແລະ ພາຫະນະ ໄດ້ເປັນຈຳນວນຫຼາຍ; ແຕ່ເຖິງຢ່າງໃດກໍຕາມ, ຍ້ອນສະພາບປາກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ຍັງມີປະເພດຢາເສບຕິດຫຼາຍຊະນິດ,ຫຼາຍຮູບແບບ, ຫຼາຍສີສັນ ທີ່ບໍ່ທັນໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຍັງສືບຕໍ່ເກີດຂຶ້ນຢ່າງຫຼວງຫຼາຍໃນປັດຈຸບັນ. ສະນັ້ນ, ຈຶ່ງມີຄວາມຈຳເປັນຫຼາຍໃນການຈັດຕັ້ງຜັນຂະຫຍາຍ ຂໍ້ 1 ແລະ ຂໍ້ 2 ມາດຕາ 2 ຂອງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ສະບັບປີ2021 ມາເປັນມະຕິຂອງສະພາແຫ່ງຊາດ ກ່ຽວກັບບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມ ການນຳໃຊ້ ໃຫ້ເປັນອັນລະອຽດ; ທັງນີ້, ເພື່ອເປັນບ່ອນອີງໃຫ້ເຈົ້າໜ້າທີ່ຕຳຫຼວດສະກັດກັ້ນແລະຕ້ານຢາເສບຕິດ ແລະ ເຈົ້າໜ້າທີ່ຂະແໜງການທີ່ກ່ຽວຂ້ອງໃນການນຳເອົາຜູ້ກະທຳຜິດມາລົງໂທດຕາມກົດໝາຍ, ເຮັດໃຫ້ສັງຄົມມີຄວາມສະຫງົບປອດໄພຈາກສິ່ງເສບຕິດ.

ສະນັ້ນ, ຈຶ່ງມີຄວາມສຳຄັນ ແລະ ຈຳເປັນຫຼາຍໃນການຍົກລະດັບນິຕິກຳຂັ້ນລັດຖະບານ ມາເປັນມະຕິກອງປະຊຸມສະພາແຫ່ງຊາດ ເພື່ອຮັບປະກັນການຈັດຕັ້ງປະຕິບັດໃຫ້ມີຄວາມສັກສິດສູງຂຶ້ນ, ມີຄວາມເປັນເອກະພາບ, ມີປະສິດທິພາບ ແລະ ປະສິດທິຜົນ.

ກອງປະຊຸມ...

(ຕໍ່ຈາກໜ້າ 1)

ຊາຊົນປະຕິວັດລາວ, ປະທານປະເທດ, ບັນດາທ່ານການນຳຂັ້ນສູງແລະອະດີດການນຳຂັ້ນສູງຂອງພັກ-ລັດ, ນາຍົກລັດຖະມົນຕີ ແລະ ບັນດາທ່ານສະມາຊິກລັດຖະບານ, ສະມາຊິກສະພາແຫ່ງຊາດ (ສສຊ) ຈາກ 18 ເຂດເລືອກຕັ້ງທົ່ວປະເທດ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ສູນກາງແນວລາວສ້າງຊາດ,ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ, ບັນດາທ່ານທູຕານຸທູດ, ຜູ້ຕາງໜ້າອົງການຈັດຕັ້ງສາກົນປະຈຳ ສປປ ລາວ ແລະ ບັນດາຜູ້ຊົງຄຸນວຸດທິ, ຜູ້ຕາງໜ້າສະຖາບັນການສຶກສາ, ຫົວໜ່ວຍທຸລະກິດແລະແຂກຖືກເຊີນ.

ພາຍຫຼັງທ່ານ ນາງ ສູນທອນ ໄຊຍະຈັກ ໄດ້ກ່າວສູນທອນຜິດເປີດກອງປະຊຸມຢ່າງເປັນທາງການ, ທ່ານ ກອງແກ້ວ ໄຊສົງຄາມ ຮອງປະທານສະພາແຫ່ງຊາດ ໄດ້ອ່ານໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດກ່ຽວກັບມາດຕະຖານເງື່ອນໄຂ ແລະເປົ້າໝາຍທີ່ຈະເລືອກຕັ້ງເປັນປະທານສະພາແຫ່ງຊາດ ແລະ ນາຍົກລັດຖະມົນຕີ; ພ້ອມນັ້ນ, ສສຊ ໄດ້ປະກອບຄຳເຫັນ ແລະ ລົງຄະແນນສຽງຮັບຮອງເອົາທ່ານ ສອນໄຊ ສີພັນດອນ ເປັນປະທານສະພາແຫ່ງຊາດ ຜູ້ໃໝ່ ແລະ ທ່ານ ສະເຫຼີມໄຊ ກົມມະສິດ ເປັນນາຍົກລັດຖະມົນຕີ ຜູ້ໃໝ່ ເຊິ່ງທັງສອງທ່ານໄດ້ຂຶ້ນກ່າວຮັບໜ້າທີ່ຢ່າງເປັນທາງການ ໂດຍໃຫ້ຄຳໝັ້ນສັນຍາວ່າຈະສຸມທຸກສະຕິປັນຍາ, ເຫື່ອແຮງ, ຄວາມຮູ້ຄວາມສາມາດ ເຂົ້າໃນການປະຕິບັດໜ້າທີ່ທີ່ໄດ້ຮັບມອບໝາຍດ້ວຍຄວາມຮັບຜິດຊອບສູງ.

ຈາກນັ້ນ, ກອງປະຊຸມພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສີພັນດອນ ໄດ້ຮັບຟັງບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ປະຈຳປີ 2026 ແລະ ທິດທາງແຜນການປະຈຳປີ 2027 ຈາກທ່ານນາຍົກລັດຖະມົນຕີ ສະເຫຼີມໄຊ ກົມມະສິດ ແລະບົດລາຍງານກ່ຽວກັບບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ຈາກທ່ານ ຝິທ. ວັນທອງ ກອງມະນີ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ; ທ່ານ ວິໄລວົງ ບຸດດາຄຳ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ປະກອບຄຳເຫັນຕໍ່ 2 ບົດລາຍງານ. ຫຼັງຈາກນັ້ນ, ປະທານກອງປະຊຸມໄດ້ມີຄຳເຫັນເຈາะจົ້ມທັ້ງໃຫ້ທິດຊີ້ນຳໃນການຄົ້ນຄວ້າປະກອບຄຳເຫັນ, ບັນດາທ່ານ ສສຊ ກໍໄດ້ພ້ອມກັນສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳເຫັນໃສ່ບົດລາຍງານດັ່ງກ່າວ ເຊິ່ງຈະສືບຕໍ່ປະກອບຄຳເຫັນຈົນຮອດຕອນບ່າຍວັນທີ 6 ຕຸລາ (ຕາມວາລະກອງປະຊຸມ).

ກອງປະຊຸມສະໄໝສາມັນຄັ້ງນີ້ ຈະໄດ້ດຳເນີນໄປຈົນເຖິງວັນທີ 21 ຕຸລາ 2026 ເຊິ່ງຕະຫຼອດໄລຍະດຳເນີນກອງປະຊຸມ, ຫ້ອງວ່າການສະພາແຫ່ງຊາດ ໄດ້ຈັດຕັ້ງໜ່ວຍງານເພື່ອຮັບເອົາຄຳຄິດຄຳເຫັນ ແລະ ຄຳສະເໜີໂດຍກົງຈາກປະຊາຊົນ ທີ່ມີຄວາມສົນໃຈສົ່ງໄປຍັງກອງປະຊຸມຄັ້ງນີ້ ໂດຍຜ່ານ 3 ຊ່ອງທາງຄື: ໂທລະສັບສາຍດ່ວນໝາຍເລກ 156 ແຕ່ວັນນີ້ ເຖິງວັນທີ 21 ຕຸລາ ໃນໂມງລັດຖະການ ແລະ ຜ່ານທາງອີເມວ: nalao.156@gmail.com, ແອັບ: Laona.

(ນາງ ປາກາລັກ ພົມມິໄຊ)

ປະທານສະພາ...

(ຕໍ່ຈາກໜ້າ 1)

ສປປລາວ ຢ່າງເປັນທາງການຕາມຄຳເຊື້ອເຊີນຂອງ ສະຫາຍ ສະເຫຼີມໄຊ ກົມມະສິດ ນາຍົກລັດຖະມົນຕີ ລະຫວ່າງວັນທີ 8-9 ຕຸລາ ແລະເປັນປະທານຮ່ວມໃນກອງປະຊຸມສົ່ງເສີມການລົງທຶນ ລາວ-ຫວຽດນາມ ໃນວັນທີ 8 ຕຸລາ 2026.

ໂອກາດນີ້, ສະຫາຍ ສອນໄຊ ສີພັນດອນ ໄດ້ສະແດງຄວາມປິຕິຍິນດີເປັນຢ່າງຍິ່ງທີ່ໄດ້ມີໂອກາດພົບປະກັບສະຫາຍ ເລ ມິງ ຮຶງ ພ້ອມດ້ວຍຄະນະ ເຊິ່ງເປັນການເຄື່ອນໄຫວຢ້ຽມຢາມຕ່າງປະເທດຢ່າງເປັນທາງການຄັ້ງທຳອິດ ພາຍຫຼັງທີ່ໄດ້ຮັບການເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນນາຍົກລັດຖະມົນຕີ ແຫ່ງ ສສ. ຫວຽດນາມ ແລະ ໄດ້ເລືອກເອົາ ສປປລາວ ເປັນປະເທດທຳອິດ ໃນການຢ້ຽມຢາມຕ່າງປະເທດ; ສິ່ງດັ່ງກ່າວ, ເປັນການສະແດງໃຫ້ເຫັນເຖິງການຖືສຳຄັນ ແລະ ບຸລິມະສິດຕົ້ນຕໍ ໃນການເສີມຂະຫຍາຍສາຍພົວພັນພິເສດ ທີ່ມີໜຶ່ງບໍ່ມີສອງໃນໂລກນີ້ ຂອງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ. ນອກຈາກນີ້, ສະຫາຍ ສອນໄຊ ສີພັນດອນ ຍັງໄດ້ຝາກຄວາມຢື້ຢາມຖາມຂ່າວອັນອົບອຸ່ນ ແລະ ສະໜິດສະໜົມໄປຍັງບັນດາສະຫາຍ ການນຳຂັ້ນສູງຂອງພັກ-ລັດ ຫວຽດນາມ ໂດຍສະເພາະ ແມ່ນສະຫາຍປະທານສະພາແຫ່ງຊາດ ເຈີ່ນ ແທ໋ງ ເມິ້ນ ພ້ອມທັງສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ຜົນສຳເລັດຂອງການພົບປະສອງຝ່າຍລະຫວ່າງສອງນາຍົກລັດຖະມົນຕີ ລາວ-ຫວຽດນາມ ລວມທັງການເຂົ້າຢ້ຽມຂໍ່ານັບສະຫາຍເລຂາທິ ການໃຫຍ່, ປະທານປະເທດ ແຫ່ງ ສປປລາວ ແລະ ກອງປະຊຸມສົ່ງເສີມການລົງທຶນ ລາວ-ຫວຽດນາມ.

ສະຫາຍປະທານສະພາແຫ່ງຊາດລາວ ຍັງໄດ້ສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນເປັນຢ່າງສູງ ຕໍ່ການສະໜັບສະໜູນ, ຊ່ວຍເຫຼືອອັນລ້ຳຄ່າ ແລະ ທັນການ ຂອງພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ໃນໄລຍະຜ່ານມາ ໂດຍສະເພາະຕໍ່ການຊ່ວຍເຫຼືອຂອງສະພາແຫ່ງຊາດຫວຽດນາມທີ່ມີຕໍ່ສະພາແຫ່ງຊາດລາວ ແລະ ຫວັງເປັນຢ່າງຍິ່ງວ່າ ຈະສືບຕໍ່ໄດ້ຮັບການສະໜັບສະໜູນຕໍ່ໄປ ພ້ອມທັງສະແດງຄວາມຊົມເຊີຍ ແລະ ຕີລາຄາສູງຕໍ່ບັນດາຜົນສຳເລັດອັນໃຫຍ່ຫຼວງ, ຮອບດ້ານ ທີ່ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງຍາດມາໄດ້ໃນໄລຍະຜ່ານມາ ພາຍໃຕ້ການນຳພາອັນຖືກຕ້ອງ, ສະຫຼາດສ່ອງໃສ ຂອງພັກກອມມູນິດຫວຽດນາມ ອັນມີສະຫາຍເລຂາທິການໃຫຍ່ ໂຕ ເລີມ ເປັນຜູ້ນຳໜ້າ, ມີການບໍລິຫານທີ່ມີປະສິດທິພາບຂອງລັດຖະບານ ແລະ ການຕິດຕາມຢ່າງໃກ້ຊິດຂອງສະພາແຫ່ງຊາດ, ເຮັດໃຫ້ຫວຽດນາມ ສາມາດຮັກສາຈັງຫວະການພັດທະນາເສດຖະກິດ-ສັງຄົມໃນລະດັບສູງ, ຊີວິດການເປັນຢູ່ຂອງປະຊາຊົນນັບມື້ໄດ້ຮັບການປັບປຸງດີຂຶ້ນເລື້ອຍໆ, ສະຖຽນລະພາບທາງດ້ານການເມືອງ ມີຄວາມໜັກແໜ້ນ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບມີຄວາມເຂັ້ມແຂງ, ການພົວພັນຮ່ວມມືກັບຕ່າງປະເທດໄດ້ຮັບການເປີດກວ້າງ, ເຮັດໃຫ້ຊື່ສຽງ ແລະ ບົດບາດອິດທິພົນຂອງຫວຽດນາມ ນັບມື້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ.

ພ້ອມດຽວກັນນັ້ນ, ສອງຝ່າຍຍັງໄດ້ແຈ້ງໃຫ້ກັນຊາບກ່ຽວກັບສະພາບການທີ່ພົ້ນເດັ່ນ ແລະ ຮ່ວມກັນແລກປ່ຽນຄຳຄິດຄຳເຫັນຕໍ່ການພົວພັນຮ່ວມມືຂອງສອງປະເທດ ກໍຄືຂອງສອງອົງການນິຕິບັນຍັດ ໃນໄລຍະຜ່ານມາ ເຊິ່ງເຫັນວ່າເຖິງສະພາບການພາກພື້ນ ແລະ ສາກົນ ມີການຜັນແປໄປຢ່າງໄວ ແລະ ສັບສົນ, ແຕ່ສາຍພົວພັນລະຫວ່າງສອງປະເທດ ໂດຍແມ່ນປະທານ ໂຮ່ ຈິ ມິນ ຜູ້ນຳທີ່ຍິ່ງໃຫຍ່ ຮ່ວມກັບປະທານໄກສອນ ພົມວິຫານ ແລະ ປະທານສຸພານຸວົງ ເປັນຜູ້ກໍ່ຕັ້ງ ໄດ້ຮັບການຖະນຸຖະໜອມ, ເພີ່ມພູນຄູນສ້າງ, ແຕກດອກອອກຜົນ ແລະ ໄດ້ຮັບການຍົກລະດັບຂຶ້ນເປັນສາຍພົວພັນມິດຕະພາບທີ່ຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລາວ-ຫວຽດນາມ ແລະ ສືບຕໍ່ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງໃນທຸກໆຂົງເຂດວຽກງານ ໂດຍສະເພາະແມ່ນການພົວພັນຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ໃນການຮ່ວມກັນຕິດຕາມ ແລະຊຸກຍູ້ຢ່າງໃກ້ຊິດການຈັດຕັ້ງຜັນຂະຫຍາຍບັນດາຂໍ້ຕົກລົງຂອງການນຳຂັ້ນສູງຂອງສອງພັກ ກໍຄືແຜນການຮ່ວມມືລະຫວ່າງສອງລັດຖະບານ ໂດຍສະເພາະແມ່ນຜົນສຳເລັດການຢ້ຽມຢາມລັດຖະກິດສສ.ຫວຽດນາມ ຂອງສະຫາຍເລຂາທິການໃຫຍ່, ປະທານປະເທດ ແຫ່ງ ສປປລາວ ເມື່ອບໍ່ດົນມານີ້ ແລະການຢ້ຽມຢາມ ສປປລາວ ຢ່າງເປັນທາງການຂອງສະຫາຍນາຍົກລັດຖະມົນຕີ ແຫ່ງ ສສ. ຫວຽດນາມ ໃນຄັ້ງນີ້ ໃຫ້ໄດ້ຮັບການຈັດຕັ້ງຜັນຂະຫຍາຍເປັນຮູບປະທຳຍິ່ງໆຂຶ້ນ.

ໃນຂະນະດຽວກັນ, ສະຫາຍ ເລ ມິງ ຮຶງ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບອັນອົບອຸ່ນ, ສະແດງຄວາມຍິນດີ ແລະ ຊົມເຊີຍສະຫາຍ ສອນໄຊ ສີພັນດອນ ທີ່ໄດ້ຮັບການເລືອກຕັ້ງເປັນປະທານສະພາແຫ່ງຊາດ ແຫ່ງ ສປປລາວ ແລະນຳເອົາຄຳຢື້ຢາມຖາມຂ່າວອັນອົບອຸ່ນຈາກສະຫາຍປະທານສະພາແຫ່ງຊາດຫວຽດນາມ ເຈີ່ນ ແທ໋ງ ເມິ້ນ ເຖິງສະຫາຍ ປະທານສະພາແຫ່ງຊາດລາວ ພ້ອມທັງສະແດງຄວາມຊົມເຊີຍຕໍ່ຜົນສຳເລັດຂອງການພົວພັນຮ່ວມມືລະຫວ່າງສອງອົງການນຕິບັນຍັດ ຫວຽດນາມ-ລາວ ທີ່ຍາດມາໄດ້ໃນໄລຍະຜ່ານມາ ເຊິ່ງໄດ້ປະກອບສ່ວນອັນສຳຄັນເຂົ້າໃນການເສີມຂະຫຍາຍສາຍພົວພັນ ແລະ ການຮ່ວມມືສອງຝ່າຍ ໃຫ້ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

ໝົດປີ ຈະເກັບ...

(ຕໍ່ຈາກໜ້າ 1)

ງານໄຟຟ້າ ກໍສືບຕໍ່ຂະຫຍາຍຕົວ ເນື່ອງຈາກເລີ່ມມີການຜະລິດພະລັງງານລົມ; ການບໍລິການຂາຍຍົກ-ຂາຍຍ່ອຍ, ບໍລິການພາກລັດ ແລະ ບໍລິການດ້ານທີ່ພັກອາໄສ ແລະ ອາຫານຕິດພັນກັບການທ່ອງທ່ຽວ ກໍຂະຫຍາຍຕົວ ເຊິ່ງສາມາດດຶງດູດນັກທ່ອງທ່ຽວຕ່າງປະເທດເພີ່ມຂຶ້ນ 7% ທຽບໃສ່ໄລຍະດຽວກັນປີຜ່ານມາ; ຂະແໜງກະສິກຳ ມີຄວາມສ່ຽງທີ່ຈະບໍ່ບັນລຸຄາດໝາຍ ຍ້ອນຄວາມຜັນຜວນຂອງລາຄານ້ຳມັນເຊື້ອໄຟ ບວກກັບການລະບາດພະຍາດອະຫິອາໝູອາຟຣິກາ ແລະ ໄພພິບັດທຳມະຊາດ ທີ່ສົ່ງຜົນກະທົບຕໍ່ຂະແໜງການດັ່ງກ່າວ.ຜ່ານການຄາດຄະເນເບື້ອງຕົ້ນ GDP ໝົດປີ ຈະຂະຫຍາຍຕົວໃນລະດັບ 5.1%(ມະຕິສພຊ:5.5%).

2. ແຜນງົບປະມານແຫ່ງລັດ: ເກັບລາຍຮັບໄດ້ 67,574.19 ຕື້ກີບ ເທົ່າກັບ 80.8% ຂອງແຜນການ, ທຽບໃສ່ໄລຍະດຽວກັນ ເພີ່ມຂຶ້ນ 24.3% ເປັນເງິນປະມານ 13,244.05 ຕື້ກີບ ແລະ ຄາດຄະເນໝົດປີຈະເກັບລາຍຮັບໄດ້ 91,813 ຕື້ກີບ ເທົ່າກັບ 110% ຂອງແຜນການ ຫຼື 21.7% ຂອງ GDP (ມະຕິ ສພຊ: 83,600 ຕື້ກີບ) ເກີນແຜນປະມານ 8,231 ຕື້ກີບ ເພາະສາມາດເກັບລາຍຮັບເພີ່ມຂຶ້ນ ເປັນຕົ້ນ ກຸ່ມບໍ່ແຮ່, ກຸ່ມຂົນສົ່ງ ແລະ ສາງ, ອາກອນກຳໄລ, ແລະ ການເກັບລາຍຮັບທັນເປັນທັນສະໄໝ; ດ້ານລາຍຈ່າຍ ປະຕິບັດໄດ້ 52,734 ຕື້ກີບ ເທົ່າກັບ 65% ຂອງແຜນການ ແລະ ໝົດປີ ຈະປະຕິບັດບໍ່ເກີນແຜນທີ່ສະພາແຫ່ງຊາດຮັບຮອງ (ແຜນການ: 81,400 ຕື້ກີບ ເທົ່າກັບ 19.50% ຂອງ GDP).

3. ດ້ານເງິນຕາ: ຄັງສຳຮອງເງິນຕາຕ່າງປະເທດ ກຸ້ມການນຳເຂົ້າ 5 ເດືອນ, ການຄ້າເກີນດຸນ1,356.53 ລ້ານໂດລາ; ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ ຢູ່ໃນລະດັບ 0.95% (ມະຕິ ສພຊ ບໍ່ໃຫ້ເກີນ 3%); ອັດຕາເງິນເຟີ້ສະເລ່ຍ 9 ເດືອນ ຢູ່ໃນລະດັບ 7.9% ສະເພາະເດືອນກັນຍາ ຢູ່ໃນລະດັບ 7.8% ແລະ ໝົດປີຄາດວ່າຈະຢູ່ໃນລະດັບ 7.4%-7.8% ມີຄວາມສ່ຽງບໍ່ບັນລຸຄາດໝາຍ (ມະຕິ ສພຊ 5% ເໜັງຕີງ ±2) ປັດໄຈຕົ້ນຕໍເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນ ຍ້ອນລາຄາພະລັງງານເພີ່ມຂຶ້ນສູງ.

4. ໄດ້ດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ 708.81 ລ້ານໂດລາ ເພື່ອຈັດສັນຊື້, ສຳຮອງສຸກເສີນ ແລະ ສະໜອງໃຫ້ສັງຄົມ.

5. ດ້ານການລົງທຶນ: ປະຕິບັດໄດ້ 83,096.89 ຕື້ກີບ ເທົ່າກັບ 90% ຂອງແຜນການ, ຄາດຄະເນໝົດປີຈະປະຕິບັດໄດ້ຕາມແຜນ ໃນນີ້, ການລົງທຶນຈາກງົບປະມານພາຍໃນ11,449.8 ຕື້ກີບ ເທົ່າກັບ 49.14% ຂອງແຜນການ(ແຜນການ 23,300 ຕື້ກີບ); ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ໄດ້ອະນຸມັດ 45 ໂຄງການ ມູນຄ່າ 193,845 ຕື້ກີບ ໃນນີ້, ຫຼາຍກວ່າໝູ່ແມ່ນຂະແໜງໄຟຟ້າ ແລະ ການກໍ່ສ້າງ. ຮອດປັດຈຸບັນ, ມີການນຳເຂົ້າທຶນຕົວຈິງ 71,647.09 ຕື້ກີບ ເທົ່າກັບ 113.6% ຂອງແຜນການ (ແຜນການ 63,054 ຕື້ກີບ).







ສຸຂະພາບ

ຄຸນປະໂຫຍດຈາກໃບສີດາ

 # ຮຽບຮຽງໂດຍ: ຫອມສະນິດ



ຢ່າງທີ່ຮູ້ກັນດີແລ້ວວ່າ ໝາກສີດານັ້ນເປັນໝາກໄມ້ທີ່ມີປະໂຫຍດຕໍ່ຮ່າງກາຍ ມີສານຕໍ່ຕ້ານອະນຸມູນອິດສະຫຼະຫຼາຍ, ຊ່ວຍໃນການຊະລໍຄວາມແກ່ ແລະຮອຍແຫ່ວ, ອຸດົມໄປດ້ວຍສານໃຍອາຫານຊ່ວຍໃຫ້ຜິວພັນເປ່ເປ່ປ່ັ່ງສົດໃສ ແລະອີກຫຼວງຫຼາຍ ແຕ່ຮູ້ ຫຼື ບໍ່ວ່າ ໃບໝາກສີດານັ້ນກໍມີປະໂຫຍດບໍ່ແພ້ກັນ ທັ້ງຊ່ວຍດັບກິ່ນປາກ, ແກ້ເຈັບທ້ອງ, ຖອກທ້ອງທີ່ສຳຄັນຊ່ວຍບັນເທົາ ແລະຮັກສາໄດ້ຫຼາຍພະຍາດ; ມື້ນີ້, ຈະມາແນະນຳຄຸນປະໂຫຍດຂອງໃບສີດາໃຫ້ໄດ້ຮູ້ດັ່ງນີ້:

1. ຊ່ວຍລະງັບກິ່ນປາກ: ໃນໃບໝາກສີດາມີນ້ຳມັນຫອມລະເຫີຍຫຼາຍຊະນິດ ຈຶ່ງສາມາດຊ່ວຍລະງັບກິ່ນປາກໄດ້ດີ ໂດຍສະເພາະບັນຫາກິ່ນປາກທີ່ເກີດຈາກແຂ້ວແມງ, ເຫືອກອັກເສບ, ເສດອາຫານເປ່ືາຄ້າງ ຫຼື ກິ່ນປາກຈາກການຮັບປະທານອາຫານທີ່ມີກິ່ນແຮງທັ້ງໝົດ ທັ້ງກິ່ນເຫລົ້າ ແລະ ຢາສູບ ສ່ວນວິທີໃຊ້ກໍພຽງນຳໃບໝາກສີດາສົດປະມານ 3-5 ໃບ ລ້າງໃຫ້ສະອາດແລ້ວຄ່ອຍນຳມາຫຍ້ຳແລ້ວກໍຄາຍຖິ້ມ;

2. ປິ່ນປົວພະຍາດເຫືອກອັກເສບ ແລະ ບັນເທົາອາການປວດແຂ້ວຈາກເຫືອກອັກເສບ: ຈາກການສຶກສາຂອງ ມະຫາວິທະຍາໄລດັ້ງພົບວ່າ ຜູ້ປ່ວຍຈຳນວນ 70 ຄົນ ທີ່ໃຊ້ນ້ຳຢາບ້ວນປາກທີ່ມີສ່ວນປະສົມຂອງສານສະກັດຈາກໃບໝາກສີດາ ສາມາດຫຼຸດອາການອັກເສບຂອງເຫືອກ ແລະ ບັນເທົາອາການປວດແຂ້ວ ຈາກເຫືອກອັກເສບໄດ້ 19.8% ເນື່ອງຈາກໃນໃບໝາກສີດາມີລິດຕ້ານອາການອັກເສບ;

3. ຫຼຸດການປັ່ນຂອງລຳໄສ້, ແກ້ເຈັບທ້ອງ ແລະ ຖອກທ້ອງ: ໃບໝາກສີດາມີ ເຄວີຣ໌ຊີທິນ (Quercetin) ແລະ Quercetin-3arabinoside ມີລິດຢັບຢັ້ງແອຊີຕິນໂຄລິນ (Acetylcholine) ຈຶ່ງຊ່ວຍໃຫ້ຢຸດຖ່າຍ ແລະສາມາດຂ້າເຊື້ອແບກທີເຣຍ, ເຊື້ອໄວຣັດ ແລະ ມີລິດຂ້າເຊື້ອພະຍາດ ທີ່ເປັນສາເຫດຂອງອາການເຈັບທ້ອງ, ຖອກທ້ອງໄດ້ ໂດຍວິທີຮັບປະທານໃບໝາກສີດາເປັນຢາແກ້ເຈັບທ້ອງ ໃຫ້ນຳໃບໝາກສີດາ 10-15 ໃບ ມາລ້າງນ້ຳໃຫ້ສະອາດ ຈາກນັ້ນ, ຕຳພໍແຫຼກແລ້ວນຳໄປຕົ້ມກັບນ້ຳ 1 ແກ້ວໃຫຍ່ ປະສົມເກືອໄປນ້ອຍໆ ພໍຝຶດແລ້ວຈຶ່ງພັກໃຫ້ເຊົ່າຮ້ອນ ແລ້ວນຳມາຈິບເປັນຊາໃບໝາກສີດາ;

4. ຫຼຸດນ້ຳຕານໃນເລືອດ: ຈາກການທົດລອງພົບວ່າ ສານສະກັດໃບໝາກສີດາ ສາມາດຫຼຸດລະດັບນ້ຳຕານໃນເລືອດຂອງໜູ ທີ່ຖືກສີດສານໃຫ້ໃກ້ຄຽງພະຍາດເບົ່າຫວານໄດ້ໂດຍສານສະກັດໃບໝາກສີດາສາມາດຫຼຸດລະດັບນ້ຳຕານໃນເລືອດໄດ້ເຖິງ 24 ຊົ່ວໂມງ;

5. ຕ້ານເຊວມະເຮັ້ງ: ຜົນການວິໄຈພົບວ່າ ສານສະກັດຈາກໃບໝາກສີດາມີຄວາມເປັນພິດຕໍ່ເຊວມະເຮັ້ງ ໄຟໂບມຊາຣ໌ໂຄມາ (Fibrosarcoma) ແລະ ຊ່ວຍຕ້ານເຊື້ອເຊວມະເຮັ້ງເຕົ້ານົມໄດ້;

6. ຫຼຸດອາການປວດປະຈຳເດືອນ: ໃບໝາກສີດາທີ່ສະກັດຈາກສານເອທານອິວ ແລະ ສານຟລາໂວນອຍປະສົມຢູ່ນຳ ເຊິ່ງສານນີ້ຈະຊ່ວຍຕ້ານອະນຸມູນອິດສະຫຼະແລະຫຼຸດອາການປວດປະຈຳເດືອນໄດ້ ໂດຍແນະນຳໃຫ້ນຳໃບໝາກສີດາສົດລ້າງສະອາດໄປແຊ່ນ້ຳ ໄວ້ປຶດໜຶ່ງ ກ່ອນນຳນ້ຳທີ່ແຊ່ມາຈິບເທື່ອລະນ້ອຍ ແຕ່ສັບພະຄຸນຂອງໃບໝາກສີດາຂໍ້ນີ້ອາດໃຊ້ບໍ່ໄດ້ຜົນກັບຜູ້ທີ່ກິນຢາຄຸມກຳເນີດ ຫຼື ຜູ້ທີ່ໄດ້ຮັບການຮັກສາດ້ວຍຮໍໂມນ;


7. ຮັກສາໄຂ້ຫວັດ: ໃບໝາກສີດາອຸດົມໄປດ້ວຍວິຕາມິນຊີທີ່ສູງຫຼາຍ ດັ່ງນັ້ນ ຈຶ່ງສາມາດເຂົ້າໄປຈັດການກັບເຊື້ອໄວຣັດໄຂ້ຫວັດໄດ້ຢ່າງດີ ໂດຍສານໃນໃບໝາກສີດາຈະຊ່ວຍຫຼຸດນ້ຳມູກ ແລະ ຫຼຸດການແຜ່ກະຈາຍຂອງເຊື້ອຫວັດໃນຮ່າງກາຍ ອາການໄຂ້ຫວັດທີ່ມີຢູ່ຈຶ່ງຈະຫຼຸເລົ້າລົງເລື້ອຍໆ ແຕ່ທີ່ສຳຄັນການໃຊ້ໃບໝາກສີດາຮັກສາໄຂ້ຫວັດຕ້ອງໃຊ້ໃບໝາກສີດາທີ່ຜ່ານຂະບວນການເຮັດໃຫ້ສຸກເສຍກ່ອນ ຈຶ່ງຈະເຫັນຜົນ;

8. ຮັກສາສິວ: ໃບໝາກສີດາມີລິດຕ້ານອາການອັກເສບ ຊ່ວຍກຳຈັດເຊື້ອແບກທີເຣຍ ແລະ ອຸດົມໄປດ້ວຍວິຕາມິນຊີ ເໝາະສຳລັບການຮັກສາສິວ ແລະ ຫຼຸດຮອຍດ່າງດຳຈາກສິວໄດ້ ໂດຍນຳໃບໝາກສີດາລ້າງສະອາດມາຕຳໃຫ້ລະອຽດ ຈາກນັ້ນ ປະສົມນ້ຳຕົ້ມສຸກລົງໄປເລັກນ້ອຍ ເພື່ອໃຫ້ໄດ້ນ້ຳມາແຕ້ມສິວ ແລະ ຮອຍດຳຈາກສິວ;

9. ເປັນຢາຫ້າມເລືອດ: ໃຊ້ໃບໝາກສີດາສົດລ້າງນ້ຳໃຫ້ສະອາດ ຈາກນັ້ນນຳມາຕຳຈົນແຫຼກແລ້ວຄ່ອຍນຳໄປພອກທີ່ແຜ ເລືອດຈະຢຸດໄຫຼ ແລະ ໃບໝາກສີດາຈະຊ່ວຍຫຼຸດອາການອັກເສບ;

10. ຊ່ວຍຂັບລົມໃນກະເພາະອາຫານ: ນ້ຳມັນຫອມລະເຫີຍ ທີ່ມີຢູ່ໃນໃບໝາກສີດາ ບໍ່ພຽງແຕ່ຊ່ວຍດັບກິ່ນປາກໄດ້ເທົ່ານັ້ນ ແຕ່ຍັງຊ່ວຍຂັບລົມໃນກະເພາະອາຫານ ແລະ ລຳໄສ້ໄດ້ອີກ ເຮັດໃຫ້ບໍ່ເກີດອາການແໜ້ນທ້ອງ

ຂໍ້ມູນຈາກ:
www.kidork.com



ຈອກແກ້ວກັບຊີວິດ

 # ໂດຍ: ຄຳບຸນມີ ລອນວິໄຊ

❋ ຫຼາຍຄົນເຫັນຮ່ອມຮູ້
ອັນຈອກໃສໆຂາວ
ຍາມເຮົາແຍງແລແກ້ວ
ແກ້ວໃສຂາວທ່ຽງຕັ້ງ

❋ ບາດນີ້ ຂຶ້ນກັບເຮົາຜູ່ໃຊ້
ເອົານ້ຳໃສເທລົງ
ຫາກວ່ານຳເອົາເຫຼົ້າ
ຍັງເອີ້ນວ່າຈອກເຫຼົ້າ

❋ ຄົນໃດມັກດື່ມເຫຼົ້າ
ໃຜທີມີມັກເມົາ
ຄວາມພໍໃຈສອຍໃຊ້
ໄປທາງຮ້າຍໂທດຕ້ອງ

❋ ເດັກເກີດໃໝ່ປຽບແກ້ວ
ມີຊີວາສົດໃສ
ບໍ່ຕ່າງຫຍັງກັບແກ້ວ
ຫາກຜິດພາດທອກຖິ້ມ

❋ ຄັນວ່າຜູ້ໃຫຍ່ແຕ້ມ
ປູກຝັງຄວາມດີງາມ
ເຫດແລະຜົນພຽງພ້ອມ
ເດັກກໍຈະສະອາດດັ່ງແກ້ວ

ມະໂນພາບພຽງກັນ
ເປັ່ງແສງປະກາຍແຈ້ງ
ປ່ຽວວ່າງແປນເປົ່າ
ໝອງເສົ້າໝົ່ນບໍ່ມີ

ວັດຖຸໃສ່ລົງໄປ
ຈອກໃນມີນ້ຳ
ມາເທຖອກທັ່ງ
ມີຜິດຮ້າຍເບື່ອເມົາ

ກໍຍໍວ່າມັນດີ
ຈົ່ມຈາຄຳຮ້າຍ
ໄປທາງດີມີປະໂຫຍດ
ໝອງເສົ້າເສື່ອມເສຍ ແທ້ໃດ!

ໃສສະອາດງາມຕາ
ເພິ່ງເຮົາສອນແຕ້ມ
ໃສແວວວາວງາມສະອາດ
ສີເປື້ອນໝົ່ນໝອງ ແທ້ນາ!

ເຕີມຕື່ມຄຸນນະທຳ
ສັ່ງສອນເດັກດ້ວຍ
ຄຳຈາມາລະຍາດ
ມີມີເສົ້າເສື່ອມເສຍ ດອກນາ!



ສັ້ນຕາຍ ຈະບອກ

(ເລື່ອງເບົ່າໆ ເອົ້າແບບກັນເອງ ບ່ເຄັ່ງພິທີການ)

 # ສຸມຫ້ອມ

❋ **ຕະ**ຫຼອດໄລຍະເວລາ 13 ວັນລັດຖະການ ທີ່ຜ່ານມາ ເປັນກອງປະຊຸມສະໄໝສາມັນເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X (156) ເພີ່ນເວົ້າ ສາຍດ່ວນຂອງສະພາ ໃຫ້ທ່ານອາໂຫຼມາ ສົ່ງສານຂ້ໍມູນເວົ້າ ເວົ້າບັນຫາຄາຂ້ອງ ສະໜອງໄປຍັງຄະນະ ເພື່ອປຶກສາຊອກຄົ້ນ ຫາທາງແກ້ຊ່ວຍກັບ ທ່ານເອີຍ! (ອີເມວ: **Nalao.156@gmail.com; App:lao na**)

❋ **ຈົ່ມ**ເຊີຍພົບສ່ຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ X ທີ່ໄດ້ປິດລົງໃບ ວັນທີ 21 ຕຸລາ ພາຍຫຼັງທີ່ດຳເນີນມາເປັນເວລາ 13 ວັນ ປອງປະຊາຊື່ນຊ້ອຍ ລ່ວຍທ່ານ ສສຊ ຍົກຍ່ເອົາຜົນງານຮ່ວມປະຊຸມຮັບຮອງໄດ້ ຫັງແຜນການຄາດໝາຍໄວ້ ເຄື່ອນໄຫວເຜີຍແຜ່ ໃຫ້ພໍ່ແມ່ພີ່ນ້ອງ ລາວຮູ້ທົ່ວເຖິງ **ນັ້ນແລ້ວ!**

ຊອບຍິ້ມ

 # ພົ້ງຄຶງ

ເລື່ອງ: ບ່ຄາມ

ສອບອິນ ຂີ່ລົດເລາະເພື່ອຊອກບ່ອນຈອດລົດເກືອບເປັນຊົ່ວໂມງ, ຂີ່ອົບກັບມາຫາງເຮົ້າ ຈຶ່ງເຫັນບ່ອນວ່າງຢູ່ໂກ້ກັບບ່ອນປ້ອງກັນກຳລັງບັ່ງເຝ້ົາຢູ່, ຈຶ່ງຄາມໄປວ່າ:

ສອບອິນ: ອ້າຍໆ ບ້ອງຈອດບ່ອນນີ້ໄດ້ບ່?
ປ້ອງກັນ: ຈອດບ່ໄດ້ເດີ
ສອບອິນ: ແລ້ວເປັນຫຍັງ ຄັນບໍ້ນມັນຄືຈອດໄດ້

ສອບອິນ ຫັງເວົ້າຫັງຊິ້ມີໃສ່ລົດຄັນໜຶ່ງ, ປ້ອງກັນຕອບຢ່າງໜ້າຕາເສີຍພ້ອມຈິບກາເຟໄປບ່າ: ອ... ຄັນບໍ້ນມັນບ່ຄາມ...



ສຸພາສິດ-ຄະຕິເຕືອນໃຈ

 # ດອກຫຍ້າ

"ໃຈບ່ໃສ່ຕ່ໜ້າ ໜ້ານ ໜ້ານ ໜ້ານ

ພັກລັດຖະບານລັດເຊຍ ຍັງມີສຽງສ່ວນຫຼາຍໃນສະພາດູມາ

(Xinhua) - ນາງ ເອລລາປາມຟີໂລວາ(Ella Pamfilova) ປະທານຄະນະກຳມະການເລືອກຕັ້ງສູນກາງຂອງລັດເຊຍ (CEC) ໄດ້ປະກາດເມື່ອວັນສຸກທີ 25 ກັນຍາ 2026 ວ່າ ຜົນການເລືອກຕັ້ງສະພາດູມາແຫ່ງລັດ (State Duma) ຫຼື ສະພາຕ່ຳ ຊຸດທີ IX ສະແດງໃຫ້ເຫັນວ່າ ພັກ United Russia ເຊິ່ງເປັນພັກລັດຖະບານ ໄດ້ຮັບໄຊຊະນະ 349 ທີ່ນັ່ງ, ຍັງຮັກສາສະຖານະ “ສຽງສ່ວນຫຼາຍຕາມລັດຖະທຳມະນູນ” ໄວ້; ນາງກ່າວວ່າ ມີຕົວແທນຈາກ 6 ພັກການເມືອງແລະຜູ້ສະໝັກເອກະລາດ 4 ຄົນ ໄດ້ຮັບເລືອກຕັ້ງເຂົ້າສູ່ສະພາຊຸດໃໝ່.

ອີງຕາມຂໍ້ມູນສະຖິຕິຂອງ CEC, United Russia ໄດ້ 349 ທີ່ນັ່ງ, ຮອງລົງມາແມ່ນພັກກອມມູນິດແຫ່ງສະຫະພັນລັດເຊຍ 37 ທີ່ນັ່ງ, ພັກເສລີປະຊາທິປະໄຕແຫ່ງລັດເຊຍ 23 ທີ່ນັ່ງ, ພັກປະຊາຊົນໃໝ່ (New People) 19 ທີ່ນັ່ງ, ພັກລັດເຊຍທີ່ຍຸຕິທຳ (A Just Russia) 17 ທີ່ນັ່ງ ແລະ ພັກ Rodina 1 ທີ່ນັ່ງ, ສ່ວນອີກ 4 ທີ່ນັ່ງ ເປັນຂອງຜູ້ສະໝັກເອກະລາດ.

ປາມຟີໂລວາ ກ່າວຕື່ມວ່າ ອັດຕາການອອກມາໃຊ້ສິດເລືອກຕັ້ງທີ່ຈັດຂຶ້ນລະຫວ່າງວັນທີ 18-20 ກັນຍາ ແມ່ນ 59.8% ເຊິ່ງສູງກວ່າຕົວເລກ 51.72% ທີ່ບັນທຶກໄວ້ໃນການເລືອກຕັ້ງຄັ້ງກ່ອນ.

ສະພາດູມາ ແມ່ນອີງການນິຕິບັນຍັດຖາວອນຂອງລັດເຊຍ, ປະກອບດ້ວຍສະມາຊິກ 450 ຄົນ.

ການຈັດສັນທີ່ນັ່ງສຳລັບການເລືອກຕັ້ງຄັ້ງນີ້ ປະຕິບັດຕາມຮູບແບບເດີມຄື: ຈາກທັງໝົດ 450 ທີ່ນັ່ງ ນັ້ນ, 225 ທີ່ນັ່ງ ຈະຖືກຈັດສັນຕາມສັດສ່ວນຄະແນນນິຍົມຂອງພັກ ຫຼື ລະບົບບັນຊີລາຍຊື່ (party-list system), ໂດຍພັກທີ່ເຂົ້າຮ່ວມຈະຕ້ອງໄດ້ຮັບຄະແນນສຽງຢ່າງໜ້ອຍ 5% ຈຶ່ງຈະມີສິດໄດ້ຮັບທີ່ນັ່ງ; ສ່ວນອີກ 225 ທີ່ນັ່ງ ມາຈາກການເລືອກຕັ້ງແບບແບ່ງເຂດ (single-mandate constituencies) ທົ່ວປະເທດ, ໂດຍໃຊ້ລະບົບຜູ້ໄດ້ຮັບຄະແນນສຽງສູງສຸດໃນເຂດນັ້ນ ເປັນຜູ້ຊະນະ(relativemajority voting system).



Palestine ເປີດຮັບສະໝັກຜູ້ສະໝັກຮັບເລືອກຕັ້ງສະພານິຕິບັນຍັດ



(Xinhua) - ວັນເສົາທີ 26 ກັນຍາ 2026, ຄະນະກຳມະການເລືອກຕັ້ງສູນກາງ (CEC) ຂອງປາແລັດສະຕິນ ໄດ້ເປີດຮັບສະໝັກບັນຊີລາຍຊື່ຜູ້ສະໝັກຮັບເລືອກຕັ້ງ ເພື່ອເຂົ້າຮ່ວມການເລືອກຕັ້ງສະພານິຕິບັນຍັດທີ່ຈະມາເຖິງ; CEC ກ່າວໃນຖະແຫຼງການວ່າ ໄລຍະການຮັບສະໝັກຈະດຳເນີນເປັນເວລາ 12 ວັນ.

ພາຍໃຕ້ກົດໝາຍການເລືອກຕັ້ງສະບັບປັດຈຸບັນ, ຜູ້ສະໝັກຮັບເລືອກຕັ້ງສະພານິຕິບັນຍັດ ຈະຕ້ອງລົງສະໝັກໃນແບບບັນຊີລາຍຊື່ເທົ່ານັ້ນ ແລະ ບໍ່ອະນຸຍາດໃຫ້ມີການລົງສະໝັກໃນນາມບຸກຄົນດຽວໂດຍແຕ່ລະບັນຊີລາຍຊື່ຈະຕ້ອງປະ ກອບດ້ວຍຜູ້ສະໝັກຈຳນວນ 16-132 ຄົນ ແລະ ຕ້ອງປະຕິບັດຕາມຂໍ້ກຳນົດທາງກົດໝາຍເລື່ອງສັດສ່ວນຕົວແທນແມ່ຍິງ; ການຍື່ນໃບສະໝັກຕ້ອງຖືກດຳເນີນການໂດຍຜູ້ປະສານງານ ແລະ ຕົວແທນທີ່ໄດ້ຮັບອຳນາດຂອງບັນຊີລາຍຊື່ນັ້ນໆ ພ້ອມກັບແບບຟອມ,ເອກະສານ ແລະ ຫຼັກຖານປະກອບທັງໝົດທີ່ຈຳເປັນ.

CEC ລະບຸວ່າ ຈະມີການກວດສອບ ແລະ ຢືນຢັນຄວາມຖືກຕ້ອງຂອງໃບສະໝັກທຸກສະບັບເພື່ອພິຈາລະນາວ່າຜ່ານເງື່ອນໄຂຕາມກົດໝາຍຫຼືບໍ່, ພ້ອມເນັ້ນຢ້ຳວ່າການຍື່ນໃບສະໝັກ ບໍ່ໄດ້ໝາຍຄວາມວ່າຈະໄດ້ຮັບການຕອບຮັບ ຫຼື ອະນຸມັດໃນທັນທີ.

ປະທານາທິບໍດີ ມາມູດອັບບາສ(Mahmoud Abbas) ໄດ້ອອກລັດຖະດຳລັດໃນເດືອນກໍລະກົດ ໂດຍກຳນົດວັນທີ 28 ພະຈິກ ເປັນວັນເລືອກຕັ້ງສະພານິຕິບັນຍັດ, ສ່ວນການເລືອກຕັ້ງປະທານາທິບໍດີ ຈະຈັດຂຶ້ນໃນໄລຍະໄຕມາດທຳອິດຂອງປີ2027. ກ່ອນໜ້ານີ້, ອັບບາສ ໄດ້ອະນຸມັດການປັບປຸງກົດໝາຍການເລືອກຕັ້ງ ເຊິ່ງລວມທັງການເພີ່ມຈຳນວນທີ່ນັ່ງໃນສະພານິຕິບັນຍັດ ເປັນ 200 ທີ່ນັ່ງ, ການຫຼຸດອາຍຸຂັ້ນຕ່ຳສຳລັບຜູ້ສະໝັກເຫຼືອ 23 ປີ, ການເພີ່ມສັດສ່ວນຕົວແທນແມ່ຍິງ ແລະ ຂໍ້ກຳນົດໃຫ້ຜູ້ສະໝັກທຸກຄົນຕ້ອງຍອມຮັບອົງການປົດປ່ອຍປາແລັດສະຕິນ (Palestine Liberation Organization - PLO) ໃນຖານະຕົວແທນທີ່ຖືກຕ້ອງຕາມກົດໝາຍຜຽງໜຶ່ງດຽວຂອງປະຊາຊົນປາແລັດສະຕິນ.

ການເລືອກຕັ້ງສະພານິຕິບັນຍັດປາແລັດສະຕິນຄັ້ງຫຼ້າສຸດໄດ້ຈັດຂຶ້ນເມື່ອເດືອນມັງກອນປີ 2006 ເຊິ່ງກຸ່ມຮາມາສ (Hamas) ໄດ້ຮັບໄຊຊະນະດ້ວຍທີ່ນັ່ງສ່ວນຫຼາຍ; ຕໍ່ມາ, ຄວາມຂັດແຍ້ງລະຫວ່າງກຸ່ມຮາມາສ ແລະ ກຸ່ມ (Fatah) ໄດ້ນຳໄປສູ່ການແບ່ງແຍກທາງການເມືອງ ແລະ ເຂດແດນລະຫວ່າງຝັ່ງຕາເວັນຕົກ ຫຼື ເວສແບ (West Bank) ແລະ ເຂດກາຊາ (Gaza). ເດືອນເມສາຜ່ານມາ, ຊາວປາແລັດສະຕິນໄດ້ລົງຄະແນນສຽງໃນການເລືອກຕັ້ງທ້ອງຖິ່ນໃນເຂດເວສແບ ແລະ ເມືອງເດຍ ອັລ-ບາລາ (Deir al-Balah) ເຊິ່ງເປັນການລົງຄະແນນສຽງຄັ້ງທຳອິດນັບຕັ້ງແຕ່ເກີດສົງຄາມໃນເຂດກາຊາເມື່ອເດືອນຕຸລາ 2023.

ສະພາສູງສະຫະລັດ ຮັບຮອງກົດໝາຍສຸຂະພາບຈິດສຳລັບນັກບິນ ແລະ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທອງອາກາດ



(Reuters) - ວັນທີ 26 ກັນຍາ 2026, ສະພາສູງສະຫະລັດ ໄດ້ຮັບຮອງຮ່າງກົດໝາຍທີ່ໄດ້ຮັບການສະໜັບສະໜຸນຈາກທັງສອງພັກ ເພື່ອປັບປຸງລະບຽບການກ່ຽວກັບຄຳແນະນຳດ້ານສຸຂະພາບຈິດສຳລັບນັກບິນ ແລະ ເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງອາກາດ, ໂດຍມີຈຸດປະສົງເພື່ອຊຸກຍູ້ໃຫ້ມີການເປີດເຜີຍຂໍ້ມູນ ແລະ ເຂົ້າຮັບການປິ່ນປົວຕັ້ງແຕ່ໄລຍະເລີ່ມຕົ້ນ.

ຮ່າງກົດໝາຍສະບັບນີ້ຫວັງວ່າຈະແກ້ໄຂບັນຫານັກບິນສາຍການບິນພານິດທີ່ມັກປິດບັງບັນຫາສຸຂະພາບຈິດ ເນື່ອງຈາກຢ້ານວ່າການເປີດເຜີຍຂໍ້ມູນການບຳບັດ,ການໃຊ້ຢາຫຼືການຂໍຄວາມຊ່ວຍເຫຼືອອາດສົ່ງຜົນໃຫ້ຖືກຍົກເລີກໃບອະນຸຍາດ, ເຊິ່ງຈະສ້າງຄວາມສ່ຽງຕໍ່ທັງນັກບິນເອງ ແລະ ຜູ້ໂດຍສານ.

ນອກຈາກນີ້, ສະພາສູງຍັງໄດ້ຜ່ານຮ່າງກົດໝາຍອີກສະບັບ ທີ່ກຳນົດໃຫ້ອົງການບໍລິຫານການບິນລັດຖະບານກາງ (Federal Aviation Administration-FAA) ອອກຄຳແນະນຳທີ່ເຂົ້າໃຈງ່າຍ ແລະ ເຂົ້າເຖິງໄດ້ງ່າຍ ກ່ຽວກັບບັນຊີລາຍຊື່ຢາທີ່ໄດ້ຮັບອະນຸຍາດ ເພື່ອຮັບປະກັນວ່ານັກບິນແລະເຈົ້າໜ້າທີ່ຄວບຄຸມການຈະລາຈອນທາງອາກາດ ຈະບໍ່ໃຊ້ຢາໂດຍຮູ້ເທົ່າບໍ່ເຖິງການທີ່ອາດສົ່ງຜົນກະທົບຕໍ່ອາຊີບຂອງຕົນ.

ຢ່າງໃດກໍຕາມ, ຮ່າງກົດໝາຍທັງສອງສະບັບຍັງຕ້ອງໄດ້ຮັບການອະນຸມັດຈາກສະພາຜູ້ແທນປະຊາຊົນກ່ອນທີ່ຈະມີຜົນບັງຄັບໃຊ້ເປັນກົດໝາຍ.

ຄປຈສພຊ...

(ຕໍ່ຈາກໜ້າ 1)

ພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄລຍະ 9 ເດືອນ, ຄາດຄະເນໝົດປີ 2026 ແລະ ທິດທາງແຜນການປີ 2027 ແລະ ການສະເໜີເຫດຜົນ ແລະ ຄວາມຈຳເປັນກ່ຽວກັບບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ໂດຍສະເພາະຕໍ່ກັບທິດທາງແຜນການປີ 2027 ເຊິ່ງໄດ້ສະເໜີບາງຄຳເຫັນ ແລະ ມາດຕະການເພີ່ມຕື່ມດັ່ງນີ້:

1. ສືບຕໍ່ປະຕິບັດແຜນວຽກຈຸດສຸມໄລຍະ 3 ເດືອນທ້າຍປີ 2026 ທີ່ຍັງຄົງຄ້າງໃຫ້ມີຜົນສຳເລັດ ລວມທັງສືບຕໍ່ຜັນຂະຫຍາຍມະຕິວ່າດ້ວຍບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ໃຫ້ເປັນແຜນງານ, ໂຄງການ ລະອຽດ ແລະ ນຳໄປຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

2. ສືບຕໍ່ປົກປັກຮັກສາ ແລະ ຮັບປະກັນໄດ້ສະຖຽນລະພາບທາງດ້ານການເມືອງ, ຄວາມສະຫງົບຂອງສັງຄົມ, ຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຕາມທິດສ້າງລັດທີ່ປົກຄອງດ້ວຍກົດໝາຍ; ເອົາໃຈໃສ່ຜັນຂະຫຍາຍມະຕິວ່າດ້ວຍບັນຊີຢາເສບຕິດທີ່ເກືອດຫ້າມ ແລະ ຢາເສບຕິດ, ສານເຄມີ ທີ່ຖືກຄວບຄຸມການນຳໃຊ້ ເຂົ້າໃນວຽກງານປ້ອງກັນ, ສະກັດກັ້ນ ແລະ ຕ້ານຢາເສບຕິດ ໃຫ້ໄດ້ຮັບຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

3. ຊຸກຍູ້ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການຂະຫຍາຍຕົວ, ຍູ້ແຮງການສ້າງເສດຖະກິດເອກະລາດເປັນເຈົ້າຕົນເອງ ຕາມທ່າແຮງບົ່ມຊ້ອນຂອງຊາດ ເຮັດໃຫ້ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ ຕາມທິດອ່ອງໄວ, ມີຄຸນນະພາບ ແລະ ຍືນຍົງ.

4. ເອົາໃຈໃສ່ຈັດເກັບລາຍຮັບງົບປະມານຕາມທ່າແຮງບົ່ມຊ້ອນຕົວຈິງທີ່ມີ ແລະ ຖານລາຍຮັບໃໝ່ ໃຫ້ຄົບຖ້ວນ, ຄຸ້ມຄອງ ແລະ ປະຕິບັດລາຍຈ່າຍງົບປະມານໃຫ້ສອດຄ່ອງຕາມກົດໝາຍ ແລະ ວິໄນແຜນການ-ການເງິນຢ່າງເຂັ້ມງວດ, ຮັບປະກັນໃຫ້ມີແຫຼ່ງງົບປະມານການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ທີ່ແນ່ນອນ ແລະ ຍືນຍົງ.

5. ສືບຕໍ່ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດຕາມມະຕິ 165/ສພຊ ກ່ຽວກັບການກໍ່ສ້າງສ້ອມແປງທາງໃນຮູບແບບໃໝ່ (OPBRC ແລະ PRTC) ແລະ ການປະຕິບັດສັນຍາຮັບເໝົາໃນແຕ່ລະຂັ້ນຕອນ ເພື່ອສະຫຼຸບຖອດບົດຮຽນ ລວມທັງແກ້ໄຂຂໍ້ຫຍຸ້ງຍາກ, ສະພາບຄວາມຊັກຊ້າຂອງໂຄງການ, ດຳເນີນການກໍ່ສ້າງໃຫ້ສຳເລັດ, ສາມາດຈັດເກັບຄ່າຜ່ານທາງເຂົ້າງົບປະມານຂອງລັດທີ່ໂປ່ງໃສ ແລະສາມາດກວດສອບໄດ້.

6. ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ ໃຫ້ຖືກຕ້ອງຕາມຂັ້ນຕອນຂອງກົດໝາຍ ໂດຍສະເພາະການຊຳລະໜີ້ສິນໃຫ້ແກ່ໂຄງການລົງທຶນຂອງລັດທີ່ສຳເລັດ 100% ທີ່ຄ້າງຊຳລະມາດົນ; ຄົ້ນຄວ້າຈັດສັນທຶນໃຫ້ແກ່ໂຄງການສືບຕໍ່ທີ່ເຫັນວ່າມີຄວາມສຳຄັນ, ຈຳເປັນ ແລະ ໃກ້ຈະສຳເລັດ ໃຫ້ໄດ້ນຳໃຊ້ໂດຍໄວ ເປັນຕົ້ນ ການສ້ອມແປງພື້ນຖານໂຄງລ່າງຢູ່ດ່ານສາກົນ (ເສັ້ນທາງ, ອາຄານ, ສາງເກັບຮັກສາ, ບ່ອນຄ່ຽນຖ່າຍສິນຄ້າ); ເອົາໃຈໃສ່ກຳນົດລາຄາຫົວໜ່ວຍ, ມາດຕະຖານເຕັກນິກ, ມູນຄ່າໂຄງການ, ບໍລິມາດວຽກຂອງໂຄງການສືບຕໍ່ ແລະ ສະເໜີໃໝ່ ບົນພື້ນຖານປະຢັດມັດທະຍັດ, ຮັບປະກັນຄຸນນະພາບການກໍ່ສ້າງໃຫ້ສົມຄູ່ກັບງົບປະມານການລົງທຶນ.

7. ເພີ່ມທະວີການກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດສັນຍາໂຄງການເຊົ່າ-ສຳປະທານທີ່ດິນ (ໂຄງການພະລັງງານ, ບໍ່ແຮ່ ແລະ ການປູກຜຶກກະສິກຳ) ໃຫ້ຖືກຕ້ອງຕາມກົດໝາຍຢ່າງເຂັ້ມງວດ ໂດຍສະເພາະການປະຕິບັດພັນທະຕ່າງໆ, ດຳເນີນມາດຕະການຢ່າງເຂັ້ມງວດຕໍ່ໂຄງການທີ່ບໍ່ມີການພັດທະນາ, ມີການຈັບຈອງທີ່ດິນປະໄວ້ເພື່ອເກງກຳໄລ ຫຼື ຂາຍຕໍ່, ນຳໃຊ້ບໍ່ຖືກເປົ້າໝາຍ ແລະ ຈຸດປະສົງຂອງໂຄງການ, ການອະນຸມັດທັບຊ້ອນ ແລະ ຫຼາຍເກີນຄວາມຈຳເປັນ, ບໍ່ມີບົດປະເມີນຜົນກະທົບສິ່ງແວດລ້ອມ, ໂຄງການທີ່ມີຜົນກະທົບຕໍ່ທີ່ດິນທຳການຜະລິດຂອງປະຊາຊົນ.

8. ເອົາໃຈໃສ່ແກ້ໄຂບັນຫາການບຸກລຸກທີ່ດິນປ່າໄມ້ ໂດຍສະເພາະໂຄງການທີ່ດຳເນີນການກ່ອນໄດ້ຮັບການທັນປ່ຽນທີ່ດິນ ໃຫ້ໄດ້ຢ່າງຂາດຕົວ, ຄຸ້ມຄອງການຂຸດຄົ້ນໄມ້ຈາກໂຄງການທີ່ໄດ້ຮັບອະນຸຍາດໃນເຂດປ່າໄມ້ ໃຫ້ເກີດຜົນປະໂຫຍດຕໍ່ປະເທດຊາດ ແລະ ຟື້ນຟູປ່າ, ປູກປ່າທົດແທນຂອງໂຄງການພັດທະນາທີ່ໄດ້ຮັບອະນຸຍາດຜ່ານມາ ໃຫ້ໄດ້ຕາມຈຸດປະສົງ ແລະ ເປົ້າໝາຍຂອງໂຄງການ ລວມທັງມີວິທີການ ແລະ ມາດຕະການເຮັດໃຫ້ການປົກຫຸ້ມປ່າໄມ້ບັນລຸຕາມແຜນການ.

9. ເອົາໃຈໃສ່ຄຸ້ມຄອງ, ຕິດຕາມກວດກາ ແລະ ແກ້ໄຂບັນຫາຜົນກະທົບຂອງໂຄງການຂຸດຄົ້ນບໍ່ແຮ່, ການຂົນສົ່ງແຮ່ທາດ, ໂຄງການປູກຜຶກກະສິກຳ ແລະ ໂຄງການອື່ນໆ ໂດຍສະເພາະການປ່ອຍນ້ຳເປື້ອນ, ການບຳບັດນ້ຳເປື້ອນ, ການນຳໃຊ້ສານເຄມີເກີນຄ່າມາດຕະຖານ ໂດຍສະເພາະບັນດາໂຄງການ, ໂຮງງານທີ່ສົ່ງຜົນກະທົບຕໍ່ການດຳລົງຊີວິດປະຊາຊົນ ແລະ ສິ່ງແວດລ້ອມທຳມະຊາດ,

10. ສຸມໃສ່ການອຳນວຍຄວາມສະດວກທາງດ້ານການຄ້າ, ການເຂົ້າເຖິງຕະຫຼາດ ແລະ ການຂົນສົ່ງ ໃຫ້ສະດວກວ່ອງໄວ, ທັນສະໄໝ; ເພີ່ມທະວີການຕິດຕາມກວດກາ, ສະກັດກັ້ນການຄ້ານອກລະບົບ, ກຳນົດໂຄງສ້າງລາຄາ ແລະ ຮັກສາສະຖຽນລະພາບຂອງລາຄາສິນຄ້າທີ່ຈຳເປັນຕໍ່ການຜະລິດ ແລະ ການດຳລົງຊີວິດ ເປັນຕົ້ນ ສະບຽງອາຫານ, ນ້ຳມັນເຊື້ອໄຟ ແລະ ປັດໄຈການຜະລິດພາຍໃນ, ຄຸ້ມຄອງ ແລະ ຂຶ້ນທະບຽນການຄ້າທາງເອເລັກໂຕຣນິກ ເພື່ອເກັບລາຍຮັບເຂົ້າງົບປະມານແຫ່ງລັດ.

11. ເອົາໃຈໃສ່ຂະຫຍາຍສະຖານີຮັບ-ສົ່ງສັນຍານໂທລະສັບມືຖື ແລະ ສາຍສົ່ງໂທລະຄົມມະນາຄົມສາຍໃຍແກ້ວ (Optic Fiber) ໃນຂອບເຂດທົ່ວປະເທດໃຫ້ສຳເລັດ, ໂຄສະນາເຜີຍແຜ່ວຽກງານການຕ້ານ ແລະ ສະກັດກັ້ນອາຊະຍະກຳທາງໄຊເບີ ເພື່ອສ້າງຄວາມຮັບຮູ້ໃຫ້ແກ່ສັງຄົມຮັບຮູ້ຢ່າງກວ້າງຂວາງ, ຊຸກຍູ້ ແລະ ຕິດຕາມກວດກາບັນດາບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປັບປຸງ, ຂະຫຍາຍຍົກລະດັບຄຸນນະພາບສັນຍານອິນເຕີເນັດໃຫ້ຄອບຄຸມ ແລະ ມີສະຖຽນລະພາບທົ່ວປະເທດ ພ້ອມທັງກວດກາການກຳນົດລາຄາໃຫ້ສົມເຫດສົມຜົນ.

12. ເອົາໃຈໃສ່ກະກຽມຫຼັກສູດການສຶກສາ 6+3+3 ໃຫ້ມີຄວາມພ້ອມ ດຳເນີນໃນສົກຮຽນ 2027-2028 ຢ່າງມີປະສິດທິຜົນ, ສືບຕໍ່ຂະຫຍາຍການສຶກສາກ່ອນໄວຮຽນໃນຫຼາຍຮູບແບບໃຫ້ທົ່ວເຖິງ, ຄົ້ນຄວ້ານະໂຍບາຍເງິນອຸດໜູນຜູ້ດູແລເດັກ, ຄົ້ນຄວ້າມາດຕະການຊຸກຍູ້ ແລະ ສ້າງເງື່ອນໄຂໃຫ້ນັກຮຽນທີ່ປະລະການຮຽນໄດ້ເຂົ້າຮຽນຕໍ່ໃນລະບົບບຳລຸງ (ກສນ) ເພື່ອໃຫ້ຈົບການສຶກສາພາກບັງຄັບ, ຈັດຕັ້ງປະຕິບັດໂຄງການອາຫານທ່ຽງທີ່ມອບໃຫ້ລັດຄຸ້ມຄອງ ໃຫ້ມີປະສິດທິຜົນ ແລະ ຍືນຍົງ, ຂະຫຍາຍຫ້ອງສາມັນວິຊາຊີບ ໂດຍມີການປະສານສົມທົບກັບຜູ້ປະກອບການ ເພື່ອຮອງຮັບການມີວຽກເຮັດງານທຳໃນເວລາຮຽນຈົບ, ຄົ້ນຄວ້ານຳໃຊ້ພາລະກອນ ແລະ ໃຫ້ບຸລິມະສິດສະໜອງໂກຕາຄູ ໃຫ້ໂຮງຮຽນທີ່ຂາດຄູ ແລະ ມີການສອນຄວບຫຼາຍຫ້ອງ.

13. ເພີ່ມທະວີການປະສານງານກັບບັນດາຂະແໜງການທີ່ກ່ຽວຂ້ອງໃນການໃຫ້ຄວາມຮູ້ກ່ຽວກັບວຽກງານໂພຊະນາການໃນຊຸມຊົນ, ສ້າງລະບົບຖານຂໍ້ມູນທີ່ເຂັ້ມແຂງ, ເພີ່ມຂະບວນການໃຫ້ອັກຊິນແບບຕະລຸມບອນໃນຂອບເຂດທົ່ວປະເທດໃຫ້ກວ້າງຂວາງ, ຂະຫຍາຍຕາໜ່າງຂະແໜງສາທາລະນະສຸກຮອດທ້ອງຖິ່ນຂັ້ນຮາກຖານ ແລະ ປະກອບບຸກຄະລາກອນສາທາລະນະສຸກໃຫ້ພຽງພໍ, ສະໜອງຢາປົວພະຍາດ ແລະ ອຸປະກອນການແພດ ໃຫ້ບັນດາໂຮງໝໍ ລວມທັງການແກ້ໄຂໜີ້ສິນຄ່າຢາປົວພະຍາດ.

14. ສົ່ງເສີມການພັດທະນາສີມືແຮງງານ ແລະ ຈັດຫາວຽກເຮັດງານທຳໃຫ້ສາມາດສະໜອງແຮງງານເຂົ້າສູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ, ພັດທະນາລະບົບຂໍ້ມູນຂ່າວສານຕະຫຼາດແຮງງານໃຫ້ມີປະສິດທິພາບ ສາມາດເຊື່ອມຕໍ່ກັບລະບົບຂໍ້ມູນຂອງ 2 ຂະແໜງການທີ່ກ່ຽວຂ້ອງ ນັບທັງສູນກາງ ແລະ ທ້ອງຖິ່ນ, ຂະຫຍາຍອັດຕາປົກຄຸມປະກັນສັງຄົມໃຫ້ທົ່ວເຖິງໃນຂອບທົ່ວປະເທດ, ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ, ປົກລະດົມຮັບບໍລິຈາກເລືອດ ແລະ ສະໜອງເລືອດທີ່ປອດໄພໃຫ້ພຽງພໍກັບຄວາມຕ້ອງການຂອງຄົນເຈັບ, ເກັບກູ້ ແລະ ທຳລາຍລະເບີດຕົກຄ້າງທີ່ບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ພື້ນທີ່ການພັດທະນາຕ່າງໆ ໃຫ້ບັນລຸຕາມຄາດໝາຍ.

15. ເອົາໃຈໃສ່ປັບປຸງພື້ນຖານໂຄງລ່າງເຂົ້າໃນບັນດາແຫຼ່ງທ່ອງທ່ຽວ, ມີການແບ່ງຂັ້ນຄຸ້ມຄອງອະນຸຍາດການລົງທຶນໃນກິດຈະການທ່ອງທ່ຽວ ລະຫວ່າງສູນກາງ ກັບ ທ້ອງຖິ່ນ ໃຫ້ຈະແຈ້ງ, ສົ່ງເສີມ ແລະ ຜັດທະນາການທ່ອງທ່ຽວທີ່ຕິດພັນກັບການນຳໃຊ້ມໍລະດົກວັດທະນະທຳ, ບຸນປະເພນີຂອງຊາດ ແລະ ທ້ອງຖິ່ນ, ພ້ອມທັງຊຸກຍູ້ບັນດາຫົວໜ່ວຍທຸລະກິດນຳທ່ຽວຂອງຕ່າງປະເທດໃຫ້ຫັນເຂົ້າສູ່ລະບົບການຄຸ້ມຄອງ ແລະ ຕິດຕາມກວດກາຂະແໜງການທີ່ກ່ຽວຂ້ອງ ໃຫ້ຖືກຕ້ອງຕາມລະບຽບການ ແລະ ເຂັ້ມງວດ.

16. ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໂດຍສຸມໃສ່ 5 ວຽກຈຸດສຸມ 8 ຄາດໝາຍ ແລະ ບັນດາໂຄງການທີ່ເປັນບຸລິມະສິດ ໂດຍຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ ເຂົ້າສູ່ວຽກງານຕົວຈິງ ໃຫ້ເປັນຮູບປະທຳ; ສ້າງເປັນແຜນການ, ແຜນງານ, ໂຄງການ ແລະ ກິດຈະກຳ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ໃຫ້ມີຄາດໝາຍ, ມີຕົວຊີ້ວັດທີ່ຈະແຈ້ງຊັດເຈນ, ສ້າງແຜນງົບປະມານສະເພາະ, ປະກອບບຸກຄະລາກອນວິຊາການທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.



#ບ່າວກະບີ

ເພັ່ງ: “ເຮົາໄດ້ຍິນວ່າສາວເລຂາຄົນງາມຂອງໂຕຈາກໄປແລ້ວ, ແມ່ນແທ້ບໍ?”

ເດດ: “ແຕ່ເມຍເຮົາໄດ້ຊອກເລຂາຜູ້ໃໝ່ມາແທນແລ້ວເດ”

ເພັ່ງ: “ຈັ່ງແມ່ນປະເສີດເລີຍ! ເປັນແນວໃດ... ສາວ, ອ່ອນຊອນ ອ້ອນແອ້ນ ແລະ ງາມໜ້າຮັກຢູ່ບໍ?”

ເດດ (ສຽງເສົ້າ): “ບັກຫົວລ້ານ!”

#BAOKBU

PHENG: “I've heard that your pretty secretary has left, right?”

DETH: “But my wife has replaced het with the new one”

PHENG: “Wonderful! is she tall, slim and pretty?”

DETH (in sad woice): “He is bald!”

ຜູ້ຊີ້ນຳ

ທ່ານ ເອັມພອນ ອາໂນໄທ ຮອງຫົວໜ້າຫ້ອງວ່າການສະພາແຫ່ງຊາດ

ຄະນະບັນນາທິການ

ທ່ານ ບໍ ທານປະເສີດ ຫົວໜ້າ ບກ
ທ່ານ ເອລາວັນ ພັນທະລາວົງ ຮອງຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

ກອງບັນນາທິການ

ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ສຸພາວັນ ຫອມສະນິດ
ທ່ານ ນາງ ອາລິນ ສຸພິມມະປະດິດ

ອອກແບບ - ຈັດໜ້າ

ທ່ານ ນາງ ນິດຕາ ຄຸນປາກດີ

ຮູບພາບປະກອບ

ທ່ານ ສອນສັກ ວັນວິໄຊ
ທ່ານ ອານຸສອນ ພູມມີທອນ